ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ

Lao Chamber of Professional Accountants and Auditors

# ບົດລາຍງານ

ການເຄື່ອນໄຫວວຽກງານ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ

ມັງກອນ (1) - ທັນວາ (12) 2021

# ສາລະບານ

**I. ສະຖານະພາບລວມ: ........ 1**

1.1 ສະຖານະດ້ານກົດໝາຍ: ........ 1

1.2 ດ້ານການຄົ້ນຄ້ວານິຕິກຳພາຍໃນ: ........ 2

1.3 ດ້ານການຈັດຕັ້ງ: ........ 2

**II. ສະມາຊິກ: ........ 4**

2.1 ສະມາຊິກນິຕິບຸກຄົນຂອງ ສວ-ບກລ ........ 4

2.2 ສະມາຊິກບຸກຄົນຂອງ ສວ-ບກລ ........ 4

**III. ດ້ານການເຄື່ອນໄຫວ: ........ 6**

3.1 ການປະສານງານ ແລະ ການຮ່ວມມື ........ 6

3.2 ການຈັດຝຶກອົບຮົມ: ........ 7

**IV. ດ້ານການເງິນ ........ 31**

4.1 ລາຍຮັບ: ........ 31

4.2 ຂີ່ງເຂດລາຍຈ່າຍ: ........ 31

**V. ແຜນການເຄື່ອນໄຫວປະຈຳປີ 2022 ........ 31**

**ເອກະສານຊ້ອນທ້າຍ ........ 35**

# I. ສະຖານະພາບລວມ:

## 1.1 ສະຖານະດ້ານກົດໝາຍ:

### 1.1.1 ປະຫວັດຄວາມເປັນມາຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ:

ອົງການຈັດຕັ້ງວິຊາຊີບການບັນຊີ ຊຶ່ງຢູ່ພາຍໃຕ້ການຊີ້ນຳ ຂອງກະຊວງການເງິນ ຖືກສ້າງຕັ້ງຂຶ້ນ ໃນປີ 1998 ຕາມຂໍ້ຕົກລົງລັດຖະມົນຕີກະຊວງການເງິນເລກທີ 0722/ກງ ເພື່ອປະຕິບັດຕາມດຳລັດຂອງນາຍຍົກລັດຖະມົນຕີເລກທີ 161/ນຍ ໃນປີ 1996. ຈາກນັ້ນໄດ້ປ່ຽນຊື່ ເປັນສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ເລກທີ 1004/ກງ ລົງວັນທີ 07 ເມສາ 2015 ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການກວດສອບອິດສະຫຼະປີ 2014.

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ເປັນສະມາຊິກຂອງສະຫະພັນນັກບັນຊີອາຊຽນ (AFA), ຊຶ່ງປັດຈຸບັນປະເທດໄທເປັນປະທານ. ສອ-ບກລ ໄດ້ເຂົ້າເປັນສະມາຊິກສົມທົບຂອງ ສະຫະພັນນັກບັນຊີສາກົນ (IFAC) ຊຶ່ງໄດ້ຖືກຮັບຮອງເປັນທາງການໃນວັນທີ 13 ພະຈິກ 2019 ແລະມີຂໍ້ຜູກມັດປະຕິບັດແຜນການດຳເນີນງານ ທີ່ສອດຄ່ອງກັບ 07 ພັນທະຕົ້ນຕໍຂອງການເປັນສະມາຊິກ ທີ່ຖືກກຳນົດໂດຍສະຫະພັນນັກບັນຊີສາກົນ.

### 1.1.2 ພາລະບົດບາດຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ:

ພາລະບົດບາດຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ທີ່ໄດ້ກຳນົດໃນກົດໝາຍວ່າດ້ວຍການກວດສອບອິດສະຫຼະແມ່ນການປະກອບຄຳເຫັນໃຫ້ແກ່ລັດ, ປຸກລະດົມຂົນຂວາຍ, ນຳພາ, ເຕົ້າໂຮມສະມາຊິກລວມທັງປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງນັກບັນຊີ ແລະ ນັກກວດສອບ ໃຫ້ເຄື່ອນໄຫວວິຊາຊີບຖືກຕ້ອງຕາມລະບຽບກົດໝາຍ, ຊ່ວຍອົງການຂອງລັດໃນການສົ່ງເສີມ, ພັດທະນາ ແລະ ຍົກລະດັບວິຊາຊີບການບັນຊີ ແລະ ການກວດສອບ.

### 1.1.3 ໜ້າທີ່ຫຼັກຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ:

ໜ້າທີ່ຫຼັກຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແມ່ນການຈັດຝຶກອົບຮົມ, ຍົກລະດັບຄວາມຮູ້ດ້ານວິຊາຊີບການບັນຊີ ແລະ ການກວດສອບ; ຮ່ວມມືກັບອົງການຈັດຕັ້ງ ແລະ ສະຖາບັນວິຊາຊີບການບັນຊີຂອງບັນດາປະເທດພາກພື້ນ ແລະ ສາກົນ; ແລະ ຕິດຕາມກວດກາການເຄື່ອນໄຫວຂອງສະມາຊິກຕົນ.

ນອກນັ້ນ, ຍັງຕ້ອງສືບຕໍ່ປັບປຸງຫຼັກສູດວິຊາຊີບຊ່ຽວຊານບັນຊີລາວ ແລະ ການຝຶກອົບຮົມແບບຕໍ່ເນື່ອງ (CPD) ໃຫ້ສອດຄ່ອງກັບສັນຍາຮັບຮູ້ເຊິ່ງກັນແລະກັນດ້ານການບໍລິການບັນຊີອາຊຽນທີ່ລັດຖະບານລາວໄດ້ເຊັນຮ່ວມກັບບັນດາປະເທດສະມາຊິກອາຊຽນໃນປີ 2015 (ພາຍຫຼັງທີ່ໄດ້ເຊັນສັນຍາຂໍ້ຕົກລົງໃນປີ 2014).

ເພື່ອສາມາດດຳເນີນໜ້າທີ່ໃນການຈັດຝຶກອົບຮົມ ລັດຖະມົນຕີກະຊວງການເງິນໄດ້ອອກຂໍ້ຕົກລົງ ເລກທີ 3777/ກງ ລົງວັນທີ 02 ພະຈິກ 2015 ວ່າດ້ວຍການອະນຸມັດໃຫ້ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ດຳເນີນການຝຶກອົບຮົມດ້ານວິຊາຊີບ.

**1.2 ດ້ານການຄົ້ນຄ້ວານິຕິກຳພາຍໃນ:**

- ສຳເລັດການສ້າງຫຼັກສູດຝຶກອົບຮົມໄລຍະສັ້ນການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ ສຳລັບຂະແໜງຫຼັກຊັບ (IFRS Roadmap), ຊຶ່ງໄດ້ມີການຕົກລົງເຫັນດີ ຕາມຂໍ້ຕົກລົງຂອງລັດຖະມົນຕີ ສະບັບເລກທີ 03/ຄຄຊ ລົງວັນທີ 30 ມີນາ 2021 ວ່າດ້ວຍການຮັບຮອງເອົາແຜນວຽກການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ ສຳລັບຂະແໜງຫຼັກຊັບ (IFRS Roadmap);
- ສືບຕໍ່ສ້າງໂຄງການພັດທະນາຫຼັກສູດວິຊາຊີບຊ່ຽວຊານບັນຊີລາວ ໃຫ້ເປັນຫຼັກສູດສະເພາະຂອງ ສອ-ບກລ, ໃຫ້ສອດຄ່ອງກັບສະພາບເສດຖະກິດ ແລະ ສັງຄົມຂອງລາວໃນປັດຈຸບັນ ແລະ ຮັບປະກັນທາງດ້ານຄຸນນະພາບໃຫ້ສອດຄ່ອງຕາມມາດຕະຖານສາກົນດ້ານການສຶກສາ ແລະ ຄາດວ່າຈະສຳເລັດໃນປີ 2022;
- ອີງຕາມຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມ ແລະ ຄະນະຮັບຜິດຊອບກະກຽມ ໃນການດຳເນີນກອງປະຊຸມໃຫຍ່ຄັ້ງທີ I ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ, ສະບັບເລກທີ 5280/ກງ, ລົງວັນ 19 ຕຸລາ 2021, ສອ-ບກລ ໄດ້ຮ່ວມກັບກົມຄຸ້ມຄອງການບັນຊີປັບປຸງກົດລະບຽບ ຂອງ ສອ-ບກລ;

  ໄດ້ຮ່າງລະບຽບການ ກ່ຽວກັບການຈົດທະບຽນສະມາຊິກ ຂອງ ສອ-ບກລ ເບື້ອງຕົ້ນ ໂດຍໃຫ້ສອດຄ່ອງກັບ ບົດຮຽນໃນການປະຕິບັດຕົວຈິງທີ່ດີສຸດຂອງສາກົນ ແຕ່ລໍຖ້າໃຫ້ມີການຮັບຮອງກົດລະບຽບສະບັບປັບປຸງ ຈຶ່ງຈະປັບປຸງໃຫ້ສົມບູນຂຶ້ນ.

**1.3 ດ້ານການຈັດຕັ້ງ:**

**1.3.1 ຄະນະບໍລິຫານ ແລະ ບຸກຄະລາກອນ:**

- ປະທານ 01 ທ່ານ (ຕາມຂໍ້ຕົກລົງແຕ່ງຕັ້ງ ຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 582/ກງ ລົງວັນທີ 22 ກຸມພາ(2) 2014;
- ຮອງປະທານ 01 ທ່ານ (ຕາມຂໍ້ຕົກລົງແຕ່ງຕັ້ງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 3778/ກງ ລົງວັນທີ 02 ພະຈິກ 2015);
- ຄະນະບໍລິຫານງານ 07 ທ່ານ (ຕາມຂໍ້ຕົກລົງແຕ່ງຕັ້ງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 2631/ກງ ລົງວັນທີ 16 ສິງຫາ 2018 ແລະ ຂໍ້ຕົກລົງວ່າດ້ວຍ ການແຕ່ງຕັ້ງຄະນະບໍລິຫານງານ ສອ-ບກລ ເພີ່ມເຕີມ 01 ທ່ານ ເລກທີ 0978/ກງ, ລົງວັນທີ: 22 ກຸມພາ 2021) ລວມເປັນ 8 ທ່ານ;
- ຄະນະກຳມະການຝຶກອົບຮົມ 11 ທ່ານ (ຕາມຂໍ້ຕົກລົງແຕ່ງຕັ້ງ ສະບັບເລກທີ 009/ສອ-ບກລ ລົງວັນທີ 21 ມັງກອນ 2020 ຂອງປະທານສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ). ຄະນະກຳມະການດັ່ງກ່າວໄດ້ມີການຈັດກອງປະຊຸມ 04 ຄັ້ງຕໍ່ປີ ເພື່ອຕິດຕາມ ແລະ ສະຫຼຸບຜົນການຈັດຕັ້ງປະຕິບັດຝຶກອົບຮົມທີ່ຜ່ານມາ ແລະ ແຜນການຝຶກອົບຮົມໃນຕໍ່ໜ້າ.
- ຄະນະກຳມະການຈົດທະບຽນ ຈຳນວນ 07 ທ່ານ (ຕາມຂໍ້ຕົກລົງແຕ່ງຕັ້ງ ຂອງປະທານສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ສະບັບເລກທີ 001/ສອ-ບກລ ລົງວັນທີ 07 ມັງກອນ 2019) ຈານວນ 10 ທ່ານ. ຄະນະດັ່ງກ່າວທີ່ຖືກແຕ່ງຕັ້ງຍັງ ບໍ່ສາມາດເຄື່ອນໄຫວໄດ້ເທົ່າທີ່ຄວນ. ສະນັ້ນ, ຈະໄດ້ມີການປັບປຸງຄະນະດັ່ງກ່າວຄືນ;
- ບຸກຄະລາກອນ 05 ທ່ານ, ຍິງ 03 ທ່ານ ແລະ ພ້ອມນີ້ຍັງມີທີ່ປຶກສາດ້ານວິຊາການ 01 ທ່ານ.

# ໂຄງຮ່າງການຈັດຕັ້ງຂອງ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ



### 1.3.2 ດ້ານນະໂຍບາຍ-ດ້ານການສົ່ງເສີມ ບຸກຄະລາກອນ:

ໄດ້ໃຫ້ໂອກາດພະນັກງານເຂົ້າຮ່ວມປະຊຸມສຳມະນາ ແລະ ຝຶກອົບຮົມ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ຂອງ ສອ-ບກລ ທາງດ້ານເຕັກນິກວິຊາການທີ່ກ່ຽວຂ້ອງ ໂດຍສະເພາະແມ່ນເຂົ້າຮ່ວມຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີລາວ.

## II. ສະມາຊິກ:

ໃນປີ 2021 ທີມງານ ສອ-ບກລ ໄດ້ມີການຕິດຕາມພົວພັນສະມາຊິກໂດຍປະສານສົມທົບກັບ ພະແນກຄຸ້ມຄອງກວດສອບອິດສະລະ-ກົມຄຸ້ມຄອງການບັນຊີ ເພື່ອຕິດຕາມການປະຕິບັດລະບຽບ, ການປະຕິບັດພັນທະຕ່າງໆ ໂດຍສະເພາະແມ່ນສະມາຊິກສາມັນນິຕິບຸກຄົນ ແລະ ສະມາຊິກສາມັນບຸກຄົນ ແລະ ນອກຈາກນັ້ນຍັງໄດ້ລະດົມໃຫ້ນັກວິຊາຊີບການບັນຊີ ແລະ ກວດສອບມາສະໝັກເຂົ້າເປັນສະມາຊິກຂອງ ສອ-ບກລ ໂດຍສະເພາະແມ່ນທີ່ປຶກສາບັນຊີລຸ້ນ 01-11 ແລະ ສອ-ບກລ ຍັງໄດ້ເຜີຍແຜ່ລະບຽບການຕ່າງໆໃຫ້ແກ່ສະມາຊິກຮັບຊາບດ້ວຍວິທີການສົ່ງລະບຽບຜ່ານທາງອີເມວ, ທາງເວບໄຊ໌ ແລະ ແຈກຢາຍໃນເວລາມາສະໝັກເປັນສະມາຊິກຂອງ ສອ-ບກລ ແລະ ເວລາມາຕໍ່ອາຍຸສະມາຊິກ, ຊຶ່ງລາຍລະອຽດຈຳນວນສະມາຊິກໃນທ້າຍປີ 2021 ມີດັ່ງລຸ່ມນີ້:

### 2.1 ສະມາຊິກນິຕິບຸກຄົນຂອງ ສອ-ບກລ

ໃນທ້າຍປີ 2021 ສອ-ກລ ມີສະມາຊິກນິຕິບຸກຄົນທັງໝົດ ຈຳນວນ 92 ຫົວໜ່ວຍ: ໃນນັ້ນມີສະມາຊິກສາມັນ 86 ຫົວໜ່ວຍ ແລະ ສະມາຊິກສະໜັບສະໜູນ 06 ຫົວໜ່ວຍ (ມີລາຍລະອຽດຄັດຕິດໃນເອກະສານຊ້ອນທ້າຍ).

### 2.2 ສະມາຊິກບຸກຄົນຂອງ ສອ-ບກລ

ໃນປີ 2021 ມີສະມາຊິກບຸກຄົນ ຈຳນວນ 264 ທ່ານ, ໃນນັ້ນມີສະມາຊິກສາມັນບຸກຄົນ 180 ທ່ານ, ສະມາຊິກສະໜັບສະໜູນປະກອບອາຊີບ 20 ທ່ານ ແລະ ສະມາຊິກສະໜັບສະໜູນບຸກຄົນອື່ນ 64 ທ່ານ,

ຕາຕະລາງ 01: ສະມາຊິກບຸກຄົນຂອງ ສອ-ບກລ

| ລ/ດ | ເນື້ອໃນລາຍລະອຽດ | ຈຳນວນລວມສະມາຊິກໃນປີ 2021 |
|---|---|---|
| 1 | ສະມາຊິກສາມັນບຸກຄົນ | 180 |
| 2 | ສະມາຊິກສະໜັບສະໜູນປະກອບອາຊີບ | 20 |
| 3 | ສະມາຊິກສະໜັບສະໜູນ ບຸກຄົນອື່ນ | 64 |
| **ລວມ:** | | **264** |

ສະມາຊິກທັງໝົດຂອງ ສວ-ບກລ ໄດ້ແບ່ງອອກເປັນຕາມແຕ່ລະປະເພດຂອງສະມາຊິກ ຊຶ່ງລາຍລະອຽດແຕ່ລະປະເພດມີດັ່ງນີ້:

**ໂຄງຮ່າງສະແດງ ການຈຳແນກປະເພດສະມາຊິກຂອງ ສວ-ບກລ**




(ມີລາຍລະອຽດຄັດຕິດໃນເອກະສານຊ້ອນທ້າຍ)

## III. ດ້ານການເຄື່ອນໄຫວ:

ອີງໃສ່ການປະຕິບັດມາດຕະການປ້ອງກັນການແຜ່ລະບາດຂອງພະຍາດ ໂຄວິດ 19, ການຈັດຕັ້ງປະຕິບັດບາງກິດຈະກຳຂອງ ສວ-ບກລ ໃນປີ 2021 ບໍ່ສາມາດປະຕິບັດໄດ້ຕາມແຜນທີ່ວາງໄວ້ ໂດຍສະເພາະແມ່ນການຝຶກອົບຮົມຫຼັກສູດວິຊາຊີບນັກຊ່ຽວຊານບັນຊີລາວ, ການຈັດກອງປະຊຸມ, ການສຳມະນາ. ແຕ່ເຖິງຢ່າງໃດກໍຕາມ ເພື່ອປະຕິບັດຕາມຄຳສັ່ງຂອງລັດຖະບານ ທີມງານ ສວ-ບກລ ໄດ້ປະຕິບັດວຽກງານຢູ່ບ້ານຂອງຕົນ ໂດຍໄດ້ພະຍາຍາມເຄື່ອນໄຫວວຽກງານ, ການຝຶກອົບຮົມໃນຮູບແບບທາງໄກ (ອອນລາຍ) ຜ່ານທາງ WhatsApp, Skype, Zoom ແລະ Google Meet ເຊັ່ນ: ການຈັດກອງປະຊຸມ, ການປະສານກັບສະມາຊິກ, ການປະສານກັບນັກຝຶກອົບຮົມ ແລະ ການປະສານກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ຊຶ່ງລາຍລະອຽດໃນການເຄື່ອນໄຫວວຽກໃນປີ 2021 ມີດັ່ງລຸ່ມນີ້:

### 3.1 ການປະສານງານ ແລະ ການຮ່ວມມື

- ປະສານ ແລະ ຮ່ວມມືກັບ ກົມຄຸ້ມຄອງການບັນຊີ-ກະຊວງການເງິນ ເພື່ອຕິດຕາມການເຄື່ອນໄຫວຂອງສະມາຊິກ, ການຈັດກອງປະຊຸມທາງດ້ານວິຊາການ ແລະ ການກະກຽມຈັດກອງປະຊຸມໃຫຍ່ວິສາມັນ ຂອງ ສວ-ບກລ;
- ປະສານຮ່ວມມືກັບ ພາກວິຊາບັນຊີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ (FEB-NUoL) ແລະ ມະຫາວິທະຍາໄລສີປະທຸມ (SPU) ເພື່ອວາງແຜນຝຶກອົບຮົມຍົກລະດັບຄວາມຮູ້ທາງດ້ານການບັນຊີ ໃຫ້ແກ່ນັກບັນຊີລາວ ແລະ ນັກສຶກສາໃນລະດັບມະຫາວິທະຍາໄລ;
- ປະສານຮ່ວມມືກັບ CPA Australia ເພື່ອກະກຽມການຝຶກອົບຮົມຍົກລະດັບທາງດ້ານວິຊາຊີບການບັນຊີໃຫ້ແກ່ນັກຊ່ຽວຊານບັນຊີ;
- ປະສານຮ່ວມມືກັບ ACCA ເພື່ອວາງແຜນປັບປຸງລະບົບການຮຽນ ແລະ ການສອບ ຫຼັກສູດວິຊາຊີບຊ່ຽວຊານບັນຊີລາວ (Lao CPA) ໃຫ້ມີຄຸນນະພາບສູງສຸດ ໂດຍສະເພາະແມ່ນຫຼັກສູດການຮຽນ-ການສອບ ແລະ ນອກຈາກນີ້ ACCA ຍັງເປັນຜູ້ສະໜັບສະໜູນການກຽມເຂົ້າເປັນສະມາຊິກສະຫະພັນນັກບັນຊີສາກົນ (IFAC);
- ປະສານກັບສະຖາບັນການທະນາຄານ ເພື່ອປຶກສາຫາລື ແລກປ່ຽນບົດຮຽນທາງດ້ານວິຊາການ, ການກະກຽມການເປີດສອນຫຼັກສູດສາກົນຮ່ວມກັນ.



- ປະສານກັບກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ ເພື່ອແລກປ່ຽນຂໍ້ມູນບໍລິສັດທີ່ປຶກສາບັນຊີ ແລະ ກວດສອບທີ່ເປັນສະມາຊິກຂອງ ສວ-ບກລ ແລະ ວາງແຜນສະໜັບສະໜູນ ແລະ ໃຫ້ໂອກາດແກ່ບໍລິສັດທີ່ເປັນຂອງຄົນລາວ ສາມາດເຂົ້າເຖິງ ແລະ ມີສ່ວນແບ່ງທາງການຕະຫຼາດ ໂດຍສະເພາະແມ່ນກົມຄຸ້ມຄອງສະຖາບັນທະນາຄານ;
- ຮ່ວມມືກັບສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ເພື່ອຊຸກຍູ້ສ້າງຂີດຄວາມສາມາດໃຫ້ບໍລິສັດໃນຂົງເຂດຫຼັກຊັບການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS)




- ນອກຈາກນີ້ ສວ-ບກລ ຍັງໄດ້ໃຫ້ຄວາມຮ່ວມມືກັບພາກສ່ວນຕ່າງໆ ເພື່ອສະໜອງຂໍ້ມູນ ດ້ານການບັນຊີ ແລະ ກວດສອບ ເພື່ອເປັນການໂຄສະນາ-ສົ່ງເສີມ ການຈັດຕັ້ງປະຕິບັດວຽກງານວິຊາຊີບການບັນຊີ ແລະ ກວດສອບໃນຂອບເຂດທົ່ວປະເທດ.

## 3.2 ການຈັດຝຶກອົບຮົມ:

### 3.2.1 ການຈັດຝຶກອົບຮົມ ຫຼັກສູດວິຊາຊີບຊ່ຽວຊານບັນຊີ (CPA):

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແມ່ນການຈັດຕັ້ງວິຊາຊີບນັກບັນຊີ ແລະ ນັກກວດສອບ ຊຶ່ງໜຶ່ງໃນໜ້າທີ່ຫຼັກແມ່ນການຈັດຝຶກອົບຮົມ, ຍົກລະດັບຄວາມຮູ້ດ້ານວິຊາຊີບການບັນຊີ ແລະ ກວດສອບ ຈຶ່ງຕ້ອງມີການປັບປຸງຫຼັກສູດຂອງຕົນເປັນແຕ່ລະໄລຍະ ໂດຍໃຫ້ສອດຄ່ອງກັບມາດຕະຖານສາກົນດ້ານການສຶກສາສໍາລັບວິຊາຊີບການບັນຊີ ທີ່ສະຫະພັນນັກບັນຊີສາກົນຮັບຮອງ, ອີກຢ່າງໜຶ່ງກໍເພື່ອສາມາດປະຕິບັດສັນຍາວ່າດ້ວຍການຮັບຮູ້ເຊິ່ງກັນ ແລະ ກັນດ້ານການບໍລິການບັນຊີ ຂອງອາຊຽນທີ່ລັດຖະບານແຫ່ງ ສປປ ລາວ ໄດ້ເຊັນຮັບຮອງໃນປີ 2015 ແລະ ກໍເພື່ອປະຕິບັດພັນທະການເປັນສະມາຊິກຂອງສະຫະພັນນັກບັນຊີອາຊຽນ (AFA) ຊຶ່ງ ສວ-ບກລ ໄດ້ເຂົ້າເປັນສະມາຊິກສົມທົບຂອງສະຫະພັນນັກບັນຊີສາກົນ (IFAC) ຢ່າງເປັນທາງການໃນວັນທີ 13 ພະຈິກ 2019.

ນັບແຕ່ປີ 2016, ເພື່ອໃຫ້ຫຼັກສູດວິຊາຊີບຊ່ຽວຊານບັນຊີ ຂອງ ສວ-ບກລ ສອດຄ່ອງກັບມາດຕະຖານສາກົນດ້ານການສຶກສາ, ສວ-ບກລ ໄດ້ຮ່ວມມືກັບ ACCA, ໜຶ່ງໃນບັນດາອົງການຈັດຕັ້ງວິຊາຊີບການບັນຊີ ຂອງປະເທດອັງກິດ, ທີ່ໄດ້ອະນຸຍາດໃຫ້ ສວ-ບກລ ນຳໃຊ້ຫຼັກສູດຂອງຕົນ ເພື່ອພັດທະນາຫຼັກສູດນັກຊ່ຽວຊານບັນຊີຂອງລາວ. ຫຼັກສູດດັ່ງກ່າວ ນຳໃຊ້ກັນໃນທົ່ວໂລກ ແລະ ສອດຄ່ອງກັບມາດຕະຖານສາກົນ, ຊຶ່ງແບ່ງອອກເປັນ 02 ລະດັບຄື: ລະດັບວິຊາພື້ນຖານ 09 ວິຊາ ແລະ ວິຊາລະດັບວິຊາຊີບ 04 ວິຊາ. ໂດຍປົກກະຕິແລ້ວສາມາດເສັງຈົບທັງໝົດທຸກວິຊາ ພາຍໃນ 03 ປີ. ການຝຶກອົບຮົມແມ່ນໃຊ້ປຶ້ມຕຳລາຂອງ ACCA ເປັນພາສາອັງກິດເປັນພື້ນຖານໃນການແຕ່ງບົດສອບ ສ່ວນການສອບເສັງແມ່ນ ສວ-ບກລ ເປັນຜູ້ກະກຽມ ແລະ ຈັດເອງ.

ສຳລັບການຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີ (CPA) ຮອດປັດຈຸບັນປະກອບມີ 05 ລຸ້ນ ຊຶ່ງລາຍລະອຽດມີດັ່ງລຸ່ມນີ້:

| ລຳດັບ | ເນື້ອໃນ | ຈຳນວນ | ໝາຍເຫດ |
|---|---|---|---|
| 1 | **ນັກຝຶກອົບຮົມລຸ້ນ 12 (CPA XII)** | **132 ທ່ານ** | |
| | | 47 ທ່ານ | ໄດ້ຮັບໃບຢັ້ງຢືນ ນັກຊ່ຽວຊານບັນຊີລາວ |
| | ປັດຈຸບັນ | 47 ທ່ານ | ສຳເລັດ ການສຳພາດ ແລະ ແຈ້ງຜົນການຂໍຫຼຸດຜ່ອນການຝຶກງານ, ປັດຈຸບັນກຳລັງຢູ່ໃນຂັ້ນຕອນກະກຽມຂະບວນການຝຶກງານ. |
| | | 38 ທ່ານ | ຍັງຢູ່ໃນຂັ້ນຕອນກະກຽມເອກະສານຂໍຫຼຸດຜ່ອນການຝຶກງານ ຫຼື ຂໍສະໝັກຝຶກງານ |
| 2 | **ນັກຝຶກອົບຮົມລຸ້ນ 13 (CPA XIII)** | **125 ທ່ານ** | |
| | ປັດຈຸບັນ | | ສຳເລັດການຝຶກອົບຮົມຄົບຕາມຫຼັກສູດແລ້ວ ກຳລັງຢູ່ໃນຂັ້ນຕອນ ສອບເສັງຄືນສຳລັບຜູ້ທີ່ເສັງບໍ່ຜ່ານ |
| 3 | **ນັກຝຶກອົບຮົມລຸ້ນ 14 (CPA XIV)** | **108 ທ່ານ** | |
| | ປັດຈຸບັນ | | ສຳເລັດການສອບເສັງ ວິຊາທີ 12 ຂອງຫຼັກສູດ ແລະ ກຳລັງດຳເນີນການຝຶກອົບຮົມວິຊາ P5 ເປັນວິຊາສຸດທ້າຍ |
| 4 | **ນັກຝຶກອົບຮົມລຸ້ນ 15 (CPA XV)** | **107 ທ່ານ** | |
| | ປັດຈຸບັນ | | ສຳເລັດການສອບເສັງ 09 ວິຊາຂັ້ນພື້ນຖານ ຂອງຫຼັກສູດ ແລະ ກຳລັງດຳເນີນການເສັງເກັບຄະແນນຄືນ ເພື່ອສືບຕໍ່ໃນລະດັບວິຊາຊີບ |
| 5 | **ນັກຝຶກອົບຮົມລຸ້ນ 16 (CPA XVI)** | **217 ທ່ານ** | |
| | ປັດຈຸບັນ | | ປັດຈຸບັນ ສຳເລັດການສອບເສັງ 04 ວິຊາ (F1, F2, F3 ແລະ F4) ຈະສືບຕໍ່ຝຶກອົບຮົມວິຊາ F5 ໃນຕົ້ນປີ 2022 |

ເພື່ອເປັນການປະຕິບັດມາດຕະການປ້ອງກັນ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດ ໂຄວິດ 19 ທີ່ທາງຄະນະສະເພາະກິດໄດ້ວາງອອກ ພ້ອມທັງຮັບປະກັນໃຫ້ການຝຶກອົບຮົມ ສາມາດສືບຕໍ່ດຳເນີນໄດ້ປົກກະຕິທາງ ສວ-ບກລ ໄດ້ມີການປັບປ່ຽນການຝຶກອົບຮົມຈາກຮູບແບບໃນຫ້ອງຮຽນ ໄປເປັນຮູບແບບທາງອອນລາຍ ໂດຍການນຳໃຊ້ໂປຣແກຣມ Google Meet ເພື່ອໃຊ້ເຂົ້າອຳນວຍຄວາມສະດວກໃນການຮຽນ-ການສອນ ໃນທຸກລຸ້ນ.

## ຮູບບັນຍາກາດການຝຶກອົບຮົມຂອງ ຊຸດຝຶກອົບຮົມ ຫລັກສູດວິຊາຊີບຊ່ຽວຊານບັນຊີ (CPA)

ບັນຍາກາດການຝຶກອົບຮົມຂອງຊຸດຝຶກອົບຮົມ CPA XIII



ບັນຍາກາດການຝຶກອົບຮົມຂອງຊຸດຝຶກອົບຮົມ CPA XIV



ບັນຍາກາດການຝຶກອົບຮົມຂອງຊຸດຝຶກອົບຮົມ CPA XIV



ບັນຍາກາດການຝຶກອົບຮົມຂອງຊຸດຝຶກອົບຮົມ CPA XV



ບັນຍາກາດການຝຶກອົບຮົມຂອງຊຸດຝຶກອົບຮົມ CPA XV




ບັນຍາກາດການຝຶກອົບຮົມຂອງຊຸດຝຶກອົບຮົມ CPA XVI



ບັນຍາກາດການຝຶກອົບຮົມຂອງຊຸດຝຶກອົບຮົມ CPA XVI





ບັນຍາກາດການຝຶກອົບຮົມຂອງຊຸດຝຶກອົບຮົມ CPA XVI




### 3.2.2 ການຝຶກອົບຮົມແບບຕໍ່ເນື່ອງ (CPD) ແລະ ຫົວຂໍ້ສະເພາະ:

ເພື່ອປະຕິບັດຕາມລະບຽບການ ກ່ຽວກັບ ການຍົກລະດັບວິຊາຊີບແບບຕໍ່ເນື່ອງ ທີ່ກຳນົດຫຼັກການພື້ນຖານ, ເງື່ອນໄຂ ແລະ ມາດຕະການການຄຸ້ມຄອງ ການຍົກລະດັບວິຊາຊີບແບບຕໍ່ເນື່ອງ ສຳລັບນັກວິຊາຊີບການບັນຊີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 63 ຂອງກົດໝາຍວ່າດ້ວຍການບັນຊີ ແລະ ມາດຕາ 32 ຂອງກົດໝາຍວ່າດ້ວຍການກວດສອບອິດສະຫຼະ ເພື່ອໃຫ້ສອດຄ່ອງກັບສະພາບການໃນປັດຈຸບັນ ແລະ ມາດຕະຖານສາກົນດ້ານການສຶກສາທີ່ອອກ ໂດຍສະພາມາດຕະຖານສາກົນດ້ານການສຶກສາ ແນໃສ່ຮັບປະກັນດ້ານການຍົກລະດັບວິຊາຊີບດັ່ງກ່າວໃຫ້ມີຄຸນນະພາບສູງ;

- ວັນທີ 14 ກຸມພາ 2021 ໄດ້ຈັດຝຶກອົບຮົມທົບທວນ "ຈັນຍາບັນສຳລັບນັກວິຊາຊີບການບັນຊີ" ໃຫ້ກັບນັກຝຶກອົບຮົມ CPA XII ມີຜູ້ເຂົ້າຮ່ວມທັງໝົດ 57 ທ່ານ ໃນນັ້ນມີນັກຝຶກອົບຮົມທີ່ເປັນສະມາຊິກຂອງ ສວ-ບກລ ຈຳນວນ 26 ທ່ານ, ຈັດຂຶ້ນທີ່ຫ້ອງປະຊຸມ ຂອງສະຖາບັນການທະນາຄານ.



- ວັນທີ 14 ພຶດສະພາ 2021 ຮ່ວມກັບ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ ແລະ ມະຫາວິທະຍາໄລສີປະທຸມ ປະເທດໄທ ຈັດຝຶກອົບຮົມອອນລາຍຜ່ານລະບົບ Zoom Meeting ໃນຫົວຂໍ້ "ການນໍາໃຊ້ລະບົບ ERP ແລະ ໂປຣແກຣມບັນຊີອອນລາຍ ໃນວຽກງານການບັນຊີ" ມີຜູ້ເຂົ້າຮ່ວມທັງໝົດ 164 ທ່ານ, ໃນນັ້ນມີສະມາຊິກຂອງ ສວ-ບກລ ເຂົ້າຮ່ວມທັງໝົດ 99 ທ່ານ.




- ວັນທີ 03 ກໍລະກົດ 2021 ໄດ້ຈັດຝຶກອົບຮົມ "ຈັນຍາບັນສໍາລັບນັກວິຊາຊີບການບັນຊີ" ໃຫ້ກັບນັກຝຶກອົບຮົມ CPA XIII ມີຜູ້ເຂົ້າຮ່ວມທັງໝົດ 106 ທ່ານ ໃນນັ້ນມີນັກຝຶກອົບຮົມທີ່ເປັນສະມາຊິກຂອງ ສວ-ບກລ ຈໍານວນ 45 ທ່ານ, ດ້ວຍຮູບແບບອອນລາຍຜ່ານລະບົບ Google Meet.



- ວັນທີ 23-24 ຕຸລາ 2021 ຈັດຝຶກອົບຮົມອອນລາຍຜ່ານລະບົບ Google Meet ໃນຫົວຂໍ້ "ສ່ວຍສາອາກອນ ສ.ປ.ປ ລາວ" ມີຜູ້ເຂົ້າຮ່ວມລວມທັງສະມາຊິກ ແລະ ບຸກຄົນທົ່ວໄປ ທັງໝົດ 42 ທ່ານ.




- ວັນທີ 15 ພະຈິກ 2021 ຈັດຝຶກອົບຮົມອອນລາຍຜ່ານລະບົບ Google Meet ໃນຫົວຂໍ້ "ລະບົບຄວບຄຸມພາຍໃນ" ມີຜູ້ເຂົ້າຮ່ວມລວມທັງສະມາຊິກ ແລະ ບຸກຄົນທົ່ວໄປ ທັງໝົດ 47 ທ່ານ.



- ວັນທີ 19 ພະຈິກ 2021 ຈັດຝຶກອົບຮົມອອນລາຍຜ່ານລະບົບ Google Meet ໃນຫົວຂໍ້ “ການກວດສອບພາຍນອກ (ຂັ້ນສູງ)” ມີຜູ້ເຂົ້າຮ່ວມລວມທັງສະມາຊິກ ແລະ ບຸກຄົນທົ່ວໄປ ທັງໝົດ 40 ທ່ານ.




- ວັນທີ 21 ພະຈິກ 2021 ຈັດຝຶກອົບຮົມອອນລາຍຜ່ານລະບົບ Google Meet ໃນຫົວຂໍ້ “ການລາຍງານການເງິນຕາມມາດຕະຖານສາກົນດ້ານການບັນຊີແຫ່ງລັດຕາມພື້ນຖານເງິນສົດ” ມີຜູ້ເຂົ້າຮ່ວມລວມທັງສະມາຊິກ ແລະ ບຸກຄົນທົ່ວໄປ ທັງໝົດ 20 ທ່ານ.



- ວັນທີ 14-17 ທັນວາ 2021, ສວ-ບກລ ໄດ້ຈັດການຝຶກອົບຮົມທາງອອນລາຍຜ່ານລະບົບ Google Meet ໃນຫົວຂໍ້ "ພື້ນຖານການບັນຊີ ແລະ ການຄຸ້ມຄອງການເງິນພາກລັດ" ໃຫ້ກັບ ພະນັກງານວິຊາການຂອງ ກົມກວດກາ ຫ້ອງວ່າການສູນກາງພັກ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດຈຳນວນ 15 ທ່ານ.






- ວັນທີ 21-24 ທັນວາ 2021, ສອ-ບກລ ໄດ້ຈັດການຝຶກອົບຮົມທີ່ຫ້ອງປະຊຸມໃຫຍ່ ຫ້ອງວ່າການສູນກາງພັກ ໃນຫົວຂໍ້ "ການກວດສອບພາຍໃນ" ໃຫ້ກັບພະນັກງານວິຊາການຂອງ ຫ້ອງວ່າການສູນກາງພັກ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດຈຳນວນ 15 ທ່ານ.







### 3.2.3 ສອບເສັງທົດສອບຄວາມສາມາດ

ເພື່ອສາມາດຮັບຮູ້ ການປະກອບອາຊີບນັກບັນຊີໃນ ສ.ປ.ປ ລາວ ຂອງຜູ້ທີ່ມີໃບຢັ້ງຢືນນັກຊ່ຽວຊານຈາກຕ່າງປະເທດ, ສະພາວິຊາຊີບນັກບັນຊີ ແລະນັກກວດສອບ, ໂດຍປະຕິບັດຕາມບົດບາດໜ້າທີ່ຂອງຕົນໄດ້ຈັດສອບເສັງທົດສອບຄວາມສາມາດແບບທາງໄກ(ອອນລາຍ).

ຮູບແບບຂອງການສອບເສັງທົດສອບຄວາມສາມາດຄັ້ງນີ້ແມ່ນແຕກຕ່າງຈາກຄັ້ງຜ່ານມາ ເພາະເປັນການສອບເສັງທາງໄກ (ອອນລາຍ) ຄັ້ງທາອິດ ແລະ ເປັນການຈັດການເສັງທົດສອບຄວາມສາມາດຄັ້ງທີ 04 ຂອງ ສວ-ບກລ.

ຂົງເຂດລະບຽບກົດໝາຍໃນການສອບເສັງຄັ້ງນີ້ປະກອບດ້ວຍ: ກົດໝາຍວ່າດ້ວຍການບັນຊີ; ກົດໝາຍວ່າດ້ວຍການກວດສອບອິດສະລະ; ກົດລະບຽບຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ, ຈັນຍາບັນສໍາລັບນັກວິຊາຊີບການບັນຊີ, ກົດໝາຍວ່າດ້ວຍຫຼັກຊັບ, ກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍວ່າດ້ວຍສ່ວຍສາອາກອນ, ກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະໜອງແຫລ່ງທຶນໃຫ້ແກ່ຜູ້ກໍ່ການຮ້າຍ.

ສໍາລັບຮູບແບບຂອງການສອບເສັງແມ່ນໄດ້ຈັດຕັ້ງການຝຶກອົບຮົມໄລຍະສັ້ນໃຫ້ກັບນັກສອບເສັງທຸກທ່ານໃນຂົງເຂດລະບຽບກົດໝາຍດັ່ງກ່າວ. ຈາກນັ້ນ, ຈຶ່ງມີການສອບເສັງທົດສອບຄວາມສາມາດໃນຮູບແບບປາລາໄນ ແລະ ອັດຕາໄນ.

ການສອບເສັງຈັດແບ່ງເປັນ 03 ວັນຄື:

- ວັນທີ 29 ຕຸລາ 2021 ແມ່ນໄດ້ຈັດການຝຶກອົບຮົມ ແລະ ຈັດການສອບເສັງ ກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍວ່າດ້ວຍຫຼັກຊັບ ແລະ ກົດໝາຍວ່າດ້ວຍສ່ວຍສາອາກອນ

- ວັນທີ 30 ຕຸລາ 2021 ແມ່ນໄດ້ຈັດການຝຶກອົບຮົມ ແລະ ຈັດການສອບເສັງ ກົດໝາຍວ່າດ້ວຍການບັນຊີ, ກົດລະບຽບພາຍໃນ ສວ-ບກລ ແລະ ກົດໝາຍວ່າດ້ວຍການຕ້ານການຟອກເງິນ ແລະ ການສະໜອງແຫລ່ງທຶນໃຫ້ແກ່ຜູ້ກໍ່ການຮ້າຍ
- ວັນທີ 31 ຕຸລາ 2021 ແມ່ນໄດ້ຈັດການຝຶກອົບຮົມ ແລະ ຈັດການສອບເສັງ ກົດໝາຍວ່າດ້ວຍການກວດສອບອິດສະລະ ແລະ ຈັນຍາບັນສຳລັບນັກວິຊາຊີບການບັນຊີ.

ການໃຫ້ຄະແນນ ມີ 04 ລະດັບ ຄື: ອ່ອນ (Poor), ປານກາງ (Fair), ດີ (Good) ແລະ ດີຫຼາຍ (Very Good), ຊຶ່ງມີຜູ້ເຂົ້າຮ່ວມສອບເສັງຈຳນວນ 06 ທ່ານ.

### 3.2.3 ການຈັດ ແລະ ການເຂົ້າຮ່ວມປະຊຸມ:

- ວັນທີ 13 ມັງກອນ 2021 ຄະນະບໍລິຫານງານຂອງ ສວ-ບກລ ໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລືທາງດ້ານວິຊາການ ກ່ຽວກັບ ການເຄື່ອນໄຫວ ຂອງ ສວ-ບກລ ທີ່ຜ່ານມາ ທີ່ຫ້ອງປະຊຸມຊັ້ນ 04 ຂອງກົມຄຸ້ມຄອງການບັນຊີ ກະຊວງການເງິນ, ໂດຍການເປັນປະທານຂອງ ທ່ານ ນາງ ດາວອນ ທອງຈັນ ຫົວໜ້າກົມຄຸ້ມຄອງການບັນຊີ ພ້ອມທັງມີຄະນະກົມ, ຫົວໜ້າພະແນກ ແລະ ຮອງພະແນກ ເຂົ້າຮ່ວມ.



- ວັນທີ 28 ມັງກອນ 2021 ໄດ້ຈັດກອງປະຊຸມຄະນະບໍລິຫານງານ ຂອງ ສວ-ບກລ ເພື່ອປຶກສາຫາລື ການອອກໃບຢັ້ງຢືນການເປັນນັກຊ່ຽວຊານບັນຊີ ໃຫ້ນັກຝຶກອົບຮົມລຸ້ນທີ 12 ທີ່ສຳເລັດການຝຶກອົບຮົມ ແລະ ປະຕິບັດຄົບເງື່ອນໄຂຕາມລະບຽບການຝຶກງານເປັນນັກຊ່ຽວຊານບັນຊີ ໄດ້ກຳນົດໄວ້. ນອກຈາກນີ້, ກອງປະຊຸມຍັງໄດ້ປຶກສາຫາລື ການແຕ່ງຕັ້ງກອງເລຂາ ຈາກ ສວ-ບກລ ປະກອບໃສ່ຄະນະກຳມະທິການຄຸ້ມຄອງຕິດຕາມ ນັກຊ່ຽວຊານບັນຊີອາຊຽນ ອີກດ້ວຍ.

- ວັນທີ 01 ກຸມພາ 2021 ໄດ້ປະຊຸມຮ່ວມກັບສະມາຄົມການເງິນຈຸລະພາກ ເພື່ອປຶກສາຫາລືຄວາມເປັນໄປໄດ້ໃນການຮ່ວມມືກັນທາງດ້ານວິຊາການ ໂດຍສະເພາະແມ່ນການຝຶກອົບຮົມຍົກລະດັບດ້ານເຕັກນິກວິຊາການ ແລະ ສອ-ບກລໄດ້ພົບກັບກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ ກ່ຽວກັບ ເລື່ອງການກວດສອບພາຍນອກ ຂອງສະຖາບັນການເງິນ-ທະນາຄານ ແລະ ການສະໜອງຂໍ້ມູນສະມາຊິກ ສອ-ບກລ ,ວາງແຜນສະໜັບສະໜູນ ແລະ ໃຫ້ໂອກາດແກ່ບໍລິສັດທີ່ເປັນຂອງຄົນລາວ ສາມາດເຂົ້າເຖິງ ແລະ ມີສ່ວນແບ່ງທາງການຕະຫຼາດ ໃນບັນດາຫົວໜ່ວຍສະຖາບັນການເງິນ ແລະ ທະນາຄານ;
- ວັນທີ 16 ກຸມພາ 2021 ພົບກັບສະມະຄົມທະນາຄານລາວ ເພື່ອສຶກສາຄວາມເປັນໄປໄດ້ໃນການຮ່ວມມືກັນໂດຍສະເພາະແມ່ນການແລກປ່ຽນກັນທາງດ້ານວິຊາການ
- ວັນທີ 25 ກຸມພາ 2021 ໄດ້ເຂົ້າຮ່ວມກອງປະຊຸມ ສະຫະພັນນັກບັນຊີອາຊ່ຽນ (AFA) ທາງອອນລາຍ ເພື່ອລາຍງານສະພາບການເຄື່ອນໄຫວຕ່າງໆ ໃນປີ 2020 ແລະ ຊອກຫາຊ່ອງທາງໃນການເຮັດວຽກຮ່ວມກັນ ແລະ ຊ່ວຍເຫຼືອກັນໃນບັນດາສະມາຊິກດ້ວຍກັນ.
- ວັນທີ 06 ເມສາ 2021 ໄດ້ຈັດກອງປະຊຸມ ຂອງຄະນະກຳມະການຝຶກອົບຮົມຂຶ້ນທີ່ຫ້ອງປະຊຸມ ຊັ້ນ 02 ຂອງ ສອ-ບກລ ໂດຍມີຜູ້ເຂົ້າຮ່ວມທັງໝົດຈຳນວນ 08 ທ່ານ, ກອງປະຊຸມໄດ້ຄົ້ນຄວ້າ ແລະ ປຶກສາຫາລືກັນ ກ່ຽວກັບ ການປະເມີນແບບຟອມຜູ້ສະໝັກຂໍຫຼຸດຜ່ອນການຝຶກງານເປັນນັກຊ່ຽວຊານບັນຊີລາວ, ໂຄງການຝຶກອົບຮົມໄລຍະສັ້ນສຳລັບນັກບັນຊີ ການເງິນ ທີ່ຈະຮ່ວມມືກັບ ສຄຄຊ, ໂຄງການປັບປຸງຫຼັກສູດຂອງ ສອ-ບກລ ແລະ ໂຄງການຝຶກອົບຮົມໂດຍຮ່ວມມືກັບສະມາຄົມທະນາຄານ.
- ວັນທີ 27 ເມສາ 2021, ເວລາ 14:00-16:30 ໂມງ, ສອ-ບກລ ນຳໂດຍ ປະທານ, ຮອງປະທານ, ຄະນະບໍລິຫານງານ ແລະ ພະນັກງານວິຊາການຂອງ ສອ-ບກລ ໄດ້ເຂົ້າຮ່ວມ ກອງປະຊຸມສາມັນ ຄັ້ງທີ 131 ຂອງສະຫະພັນນັກບັນຊີ ອາຊຽນ.






- ວັນທີ 29 ເມສາ 2021, ເວລາ 14:30-16:00 ໂມງ ສວ-ບກລ ໄດ້ເຂົ້າຮ່ວມປະຊຸມ ກັບທະນະຄານໂລກ ເພື່ອປຶກສາຫາລືຄວາມເປັນໄປ ແລະ ບັນດາຂົງເຂດທີ່ທະນາຄານໂລກຈະສາມາດເຂົ້າມາສະໜັບສະໜູນ ໂດຍສະເພາະສະໜັບສະໜູນເຂົ້າໃນໂຄງການສະໜັບສະໜູນການຂ້າມຜ່ານເຂົ້າສູ່ການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນສາກົນ ແລະ ບັນດາກິດຈະກຳຕ່າງໆ ຂອງ ສວ-ບກລ.

- ວັນທີ 29 ເມສາ 2021, ເວລາ 17:15 – 20:40 ໂມງ ສວ-ບກລ ໄດ້ຈັດກອງປະຊຸມ ຮ່ວມກັບຄະນະບໍລິຫານງານ ເພື່ອປຶກສາຫາລື ໃນການສະໜອງຂໍ້ມູນຕໍ່ການສຳຫຼວດ ກ່ຽວກັບ ເຄື່ອງມືການປະເມີນຄວາມພ້ອມທາງດ້ານດິຈິຕອນຂອງອົງການວິຊາຊີບ (PAO Digital Readiness Assessment Tool ),ໃຫ້ກັບສະຫະພັນນັກບັນຊີສາກົນ (IFAC).

- ວັນທີ 07 ພຶດສະພາ 2021 ສວ-ບກລ ໄດ້ຈັດກອງປະຊຸມ ຄະນະບໍລິຫານງານ ແລະ ຄະນະກຳມະການຝຶກອົບຮົມຂຶ້ນ ໃນເວລາ 17:30-19:30 ໂມງ ທາງອອນລາຍຜ່ານ (Skype) ໂດຍມີຜູ້ເຂົ້າຮ່ວມທັງໝົດຈຳນວນ 17 ທ່ານ, ຈຸດປະສົງຂອງກອງປະຊຸມຄັ້ງນີ້ແມ່ນເພື່ອປຶກສາຫາລືຄວາມເປັນໄປໄດ້ໃນການຈັດຝຶກອົບຮົມ ແລະ ກາຈັດການສອບເສັງນັກວິຊາຊີບຊ່ຽວຊານບັນຊີໃນຮູບແບບອອນລາຍ, ປຶກສາຫາລືຄວາມເປັນໄປໄດ້ໃນການປະເມີນແບບຟອມການຝຶກງານເປັນນັກຊ່ຽວຊານບັນຊີຂອງນັກຝຶກອົບຮົມ ລຸ້ນ 12 ໃນຮູບແບບອອນລາຍ ພ້ອມທັງລາຍງານຄວາມຄືບໜ້າໃນການກະກຽມຈັດຝຶກອົບຮົມ ທາງດ້ານວິຊາການຜ່ານທາງອອນລາຍ ໂດຍຮ່ວມມືກັນລະຫວ່າງ ສວ-ບກລ, ມະຫາວິທະຍາໄລແຫ່ງຊາດລາວ ແລະ ມະຫາວິທະຍາໄລສີປະທຸມ ປະເທດໄທ.

- ວັນທີ 26 ພຶດສະພາ 2021 ສວ-ບກລ ໄດ້ເຂົ້າຮ່ວມກອງປະຊຸມທາງອອນລາຍ (Zoom) ທີ່ຈັດໂດຍ ສຳນັກງານຄຸ້ມຄອງຫຼັກຊັບ, ຈຸດປະສົງຂອງກອງປະຊຸມແມ່ນເພື່ອປຶກສາຫາລືວຽກງານການປະຕິບັດ ມາດຕະຖານສາກົນດ້ານລາຍງານການເງິນ (IFRS) ຊຶ່ງນຳໂດຍ ທ່ານ ຮອງປະທານ, ຄະນະບໍລິຫານງານ 01 ທ່ານ ແລະ ພະນັກງານວິຊາການ ຂອງ ສວ-ບກລ.




- ວັນທີ 27 ພຶດສະພາ 2021 ສວ-ບກລ ໄດ້ມີກອງປະຊຸມເບື້ອງຕົ້ນກັບ ທີ່ປຶກສາຂອງທະນາຄານໂລກ ເພື່ອ ກະກຽມຂໍ້ມູນເຂົ້າໃນໂຄງການ ກ່ຽວກັບ ການປະຕິຮູບດ້ານເທັກໂນໂລຢີ (PAO Digital Transformation Initiative) ທີ່ ສວ-ບກລ ຮ່ວມກັບ 20 ອົງການສະພາວິຊາຊີບທີ່ຖືກຄັດເລືອກໂດຍສະຫະພັນນັກບັນຊີ ສາກົນໃຫ້ເຂົ້າຮ່ວມໂຄງການນີ້, ໂຄງການດັ່ງກ່າວເປັນໂຄງການຮ່ວມລະຫວ່າງສະຫະພັນນັກບັນຊີສາກົນ ແລະ ທະນາຄານໂລກ ຊຶ່ງນຳໂດຍ ທ່ານ ປະທານ ສວ-ບກລ, ຄະນະບໍລິຫານ 01 ທ່ານ ແລະ ພະນັກງານວິຊາ ການເຂົ້າຮ່ວມ.

- ວັນທີ 06 ມິຖຸນາ 2021, ສວ-ບກລ ໄດ້ຈັດກອງປະຊຸມ ກັບຄະນະກຳມາການສຶກສາ ເພື່ອກະກຽມຄວາມ ພ້ອມໃນດ້ານຂອງຄະນະກຳມະການ ແລະ ຂໍ້ມູນຕ່າງໆ ໃນການສຳພາດ ພ້ອມທັງໃຫ້ຜົນສຳພາດຕໍ່ກັບຜູ້ສະ ໝັກ ຂໍຍົກເວັ້ນການຝຶກງານ ເປັນນັກຊ່ຽວຊານບັນຊີ.

- ວັນທີ 03 ມິຖຸນາ 2021 ສະມະຊິກ ຄະນະບໍລິຫານຂອງ ແລະ ພະນັກງານ ສວ-ບກລ ແມ່ນໄດ້ເຂົ້າຮ່ວມກອງປະຊຸມກັບທີ່ປຶກສາຂອງ ທະນະຄານໂລກໃນໂຄງການ ການປະຕິຮູບໂຄງລ່າງພື້ນຖານດ້ານເຕັກໂນໂລຊີ ຊຶ່ງເປັນເຈົ້າພາບຮ່ວມໂດຍ ສະຫະພັນນັກບັນຊີສາກົນ ແລະ ທະນະຄານໂລກ.




- ວັນທີ 14 ມິຖຸນາ 2021, ໄດ້ເຂົ້າຮ່ວມກອງປະຊຸມທາງໄກຂອງຄະນະກຳມະທິການປະສານງານນັກຊ່ຽວຊານບັນຊີ ອາຊຽນ ຄັ້ງທີ 16 ໂດຍ ທ່ານ ອຸດອນ ທຳມະວົງສາ ຮອງຫົວໜ້າກົມຄຸ້ມຄອງການບັນຊີ ພ້ອມທັງເປັນຜູ້ຖືກແຕ່ງຕັ້ງໃນຄະນະກຳມະທິການປະສານງານດັ່ງກ່າວໄດ້ເຂົ້າຮ່ວມ. ກອງປະຊຸມຄັ້ງນີ້ມີຜູ້ຕາງໜ້າຈາກບັນດາປະເທດສະມາຊິກອາຊຽນຈຳນວນ 09 ປະເທດ, ພ້ອມດ້ວຍກອງເລຂາອາຊຽນເຂົ້າຮ່ວມ, ສ່ວນປະເທດກຳປູເຈຍແມ່ນບໍ່ໄດ້ເຂົ້າຮ່ວມ, ໂດຍການເປັນປະທານຂອງ ທ່ານ Pham Tuan Anh, ຮອງຫົວໜ້າກົມຮ່ວມມືສາກົນ, ກະຊວງການເງິນ ສສ ຫວຽດນາມ. ຜ່ານການສືບຕໍ່ປຶກສາຫາລື ກ່ຽວກັບ ການຈັດຕັ້ງປະຕິບັດສັນຍາຮັບຮູ້ເຊິ່ງກັນ ແລະ ກັນດ້ານການບໍລິການບັນຊີອາຊຽນ (ASEAN Mutual Recognition Arrangement on Accountancy Services), ໄດ້ມີການທົບທວນຄືນ ແລະ ຕິກລົງບັນຫາຕົ້ນຕໍເຊັ່ນ:
  - ເວັບໄຊທ໌ ນັກຊ່ຽວຊານບັນຊີ ອາຊຽນ
  - ການຂຶ້ນທະບຽນນັກຊ່ຽວຊານບັນຊີ ອາຊຽນ (ASEAN CPA)
  - ນັກຊ່ຽວຊານບັນຊີຕ່າງປະເທດ ທີ່ຖືກຮັບຮອງ (RFPA)
  - ແຜນດຳເນີນງານຂອງ ACPACC (ACPACC ROADMAP)
  - ສັນຍາລັກຂອງນັກຊ່ຽວຊານບັນຊີ ອາຊຽນ

- ວັນທີ 22 ມິຖຸນາ 2021 ໄດ້ເຂົ້າຮ່ວມກອງປະຊຸມຮ່ວມກັບກົມຄຸ້ມຄອງການບັນຊີທາງອອນລາຍ, ຈຸດປະສົງເພື່ອແລກປ່ຽນທາງດ້ານວິຊາການລະຫວ່າງ ກົມຄຸ້ມຄອງການບັນຊີ ແລະ ສວ-ບກລ, ໂດຍການເປັນປະທານຂອງທ່ານ ນາງ ດາວອນ ທອງຈັນ ຫົວໜ້າກົມຄຸ້ມຄອງການບັນຊີ ກະຊວງການເງິນ, ຮອງກົມ, ຄະນະກົມ, ຫົວໜ້າພະແນກ, ຮອງພະແນກ ແລະ ວິຊາການຈາກກົມຄຸ້ມຄອງການບັນຊີ ກະຊວງການເງິນ, ຮອງປະທານ

ສວ-ບກລ ແລະ ຄະນະບໍລິຫານງານ, ຫົວໜ້າຫ້ອງການເຂົ້າຮ່ວມລວມທັງໝົດ 18 ທ່ານ, ຍິງ 07 ທ່ານ. ກອງປະຊຸມໄດ້ຕົກລົງເຫັນດີເປັນເອກະພາບກັນດັ່ງລຸ່ມນີ້:

- ເຫັນດີເປັນເອກະພາບໃນການປັບປຸງໂຄງຮ່າງການຈັດຕັ້ງຂອງ ສວ-ບກລ ຕາມທິດຊີ້ນໍາຂອງຄະນະນໍາກະຊວງການເງິນ ໂດຍການເປີດກອງປະຊຸມໃຫຍ່ວິສາມັນ ຂອງ ສວ-ບກລ ແລະ ຄາດວ່າຈະໄດ້ຈັດຂຶ້ນໃນຕົ້ນປີ 2022.
- ເຫັນດີປັບປຸງນິຕິກໍາຂອງ ສວ-ບກລ ໂດຍການແຕ່ງຕັ້ງຄະນະກໍາມະການປັບປຸງນິຕິກໍາ, ຊຶ່ງປະກອບມີກົມຄຸ້ມຄອງການບັນຊີເຂົ້າຮ່ວມນໍາ ແລະ ສະເໜີລັດຖະມົນຕີກະຊວງການເງິນ ເຊັນຂໍ້ຕົກລົງແຕ່ງຕັ້ງດັ່ງກ່າວ.
- ກົມຄຸ້ມຄອງການບັນຊີ ແລະ ສວ-ບກລ ຈະໄດ້ສືບຕໍ່ພົວພັນ, ປະສານ ແລະ ຈັດກອງປະຊຸມແລກປ່ຽນຄໍາຄິດ ຄໍາເຫັນຢ່າງເປັນປົກກະຕິ.

- ວັນທີ 24 ມິຖຸນາ 2021 ສະມະຊິກ ຄະນະບໍລິຫານຂອງ ແລະ ພະນັກງານ ສວ-ບກລ ແມ່ນໄດ້ເຂົ້າຮ່ວມກອງປະຊຸມ ກັບ ທີ່ປຶກສາຂອງ ທະນາຄານໂລກ ແລະ ຕົວແທນ ຂອງສະຫະພັນນັກບັນຊີສາກົນ ໃນໂຄງການ ການປະຕິຮູບໂຄງລ່າງພື້ນຖານດ້ານເຕັກໂນໂລຊີ ຊຶ່ງເປັນເຈົ້າພາບຮ່ວມໂດຍ ສະຫະພັນນັກບັນຊີ ສາກົນ ແລະ ທະນະຄານໂລກ.
- ວັນທີ 30 ກໍລະກົດ 2021 ເວລາ 17:30-21:00 ໂມງ, ສວ-ບກລ ໄດ້ຈັດກອງປະຊຸມ ກັບ ສະມະຊິກຄະນະບໍລິຫານງານ ແລະ ຄະນະກໍາມະການສຶກສາ ເພື່ອປຶກສາຫາລືກັນ ກ່ຽວກັບ ການກະກຽມແຕ່ງຕັ້ງຄະນະກໍາມະການປັບປຸງລະບຽບ ຂອງ ສວ-ບກລ, ການກະກຽມແຕ່ງຕັ້ງຄະນະກໍາມະການ ສືບສວນ ແລະ ວິໄນ ຢູ່ ສປປ ລາວ ແລະ ລາຍງານສະພາບຄວາມຄືບໜ້າ ດ້ານການຝຶກກອົບຮົມ ຫຼັກສູດນັກຊ່ຽວຊານບັນຊີລາວ ແລະ ສະພາບການເຮັດວຽກກັບຄູ່ຮ່ວມມືຍຸດທະສາດໃຫ້ຄະນະຮັບຮູ້, ຊຶ່ງມີຜູ້ເຂົ້າຮ່ວມທັງໝົດຈໍານວນ 15 ທ່ານ.

- ວັນທີ 27 ກໍລະກົດ 2021, ສວ-ບກລ ໄດ້ເຂົ້າຮ່ວມກອງປະຊຸມເຜີຍແຜ່ແຈ້ງການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ຂອງຂະແໜງການທະນະຄານ ທີ່ສະຖາບັນການທະນະຄານໃນເວລາ 13:00-17:00 ໂມງ ຊຶ່ງນໍາໂດຍ ທ່ານ ສອນໄຊ ສີລາເພັດ ຮອງປະທານ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ພ້ອມດ້ວຍພະນັກງານວິຊາການຂອງ ສວ-ບກລ 01 ທ່ານ.

- ວັນທີ 06 ສິງຫາ 2021, ຄະນະບໍລິຫານງານຂອງ ສວ-ບກລ ໄດ້ເຂົ້າຮ່ວມກອງປະຊຸມວິຊາການຮ່ວມກັບກົມຄຸ້ມຄອງການບັນຊີ ກະຊວງການເງິນ ທາງອອນລາຍ ໂດຍພາຍໃຕ້ການເປັນປະທານ ຂອງ ທ່ານ ນາງ ດາວອນ ທອງຈັນ ຫົວໜ້າກົມຄຸ້ມຄອງການບັນຊີ ກະຊວງການເງິນ, ຫົວໜ້າພະແນກ, ຮອງພະແນກພ້ອມດ້ວຍວິຊາການຈາກກົມຄຸ້ມຄອງການບັນຊີ ກະຊວງການເງິນ ແລະ ທ່ານ ປະທານ, ຮອງປະທານ, ຄະນະບໍລິຫານງານພ້ອມດ້ວຍວິຊາການຈາກ ສວ-ບກລ ເຂົ້າຮ່ວມທັງໝົດ 14 ທ່ານ, ຍິງ 07 ທ່ານ. ຈຸດປະສົງຂອງກອງປະຊຸມແມ່ນ ເພື່ອປຶກສາຫາລືກ່ຽວກັບການກະກຽມຈັດກອງປະຊຸມໃຫຍ່ວິສາມັນ ຂອງ ສວ-ບກລ, ຊຶ່ງຄາດວ່າຈະໄດ້ຈັດຂຶ້ນໃນຕົ້ນປີ 2022 ແລະ ພ້ອມດຽວກັນນັ້ນກອງປະຊຸມຍັງໄດ້ປຶກສາຫາລື ກ່ຽວກັບ ການກະກຽມການເຊັນສັນຍາຮ່ວມມືກັບຄູ່ຮ່ວມຍຸດທະສາດ ຕ່າງໆ.
- ວັນທີ 12 ສິງຫາ 2021 ທ່ານຮອງປະທານ ສວ-ບກລ ແລະ ຄະນະບໍລິຫານງານ 01 ທ່ານ ພ້ອມດ້ວຍພະນັກງານວິຊາການໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລື ທີ່ຈັດຂຶ້ນໂດຍສໍານັກງານຄະນະກໍາມະການຄຸ້ມຄອງ

ຫຼັກຊັບ ເພື່ອປຶກສາຫາລື ກ່ຽວກັບ ການຂຶ້ນແຜນງົບປະມານນໍາໃຊ້ທຶນຊ່ວຍເຫຼືອ ໃນການປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ຈາກທະນະຄານໂລກ.

- ວັນທີ 17 ສິງຫາ 2021 ທ່ານຮອງປະທານ ພ້ອມດ້ວຍພະນັກງານ ສວ-ບກລ ໄດ້ຈັດກອງປະຊຸມກັບສະມາຄົມການເງິນຈຸລະພາກ ເພື່ອປຶກສາຫາລື ຄວາມເປັນໄປໄດ້ໃນການຈັດຝຶກອົບຮົມຍົກລະດັບວິຊາຊີບການບັນຊີໃຫ້ກັບບັນດາພະນັກງານຂອງຫົວໜ່ວຍວິສາຫະກິດການເງິນໃນຂອບເຂດທົ່ວປະເທດ.
- ວັນທີ 18 ສິງຫາ 2021 ທ່ານ ຮອງປະທານ ສວ-ບກລ ພ້ອມດ້ວຍວິຊາການ ເຂົ້າຮ່ວມປະຊຸມຄະນະກຳມະການຂອບວຸດທິອາຊຽນ, ຊຶ່ງຈັດໂດຍກົມນິຕິກຳ ກະຊວງສຶກສາ, ຈຸດປະສົງຂອງກອງປະຊຸມແມ່ນເພື່ອປະກອບຄຳເຫັນໃສ່ຮ່າງບົດລາຍງານອ້າງອີງຂອບວຸດທິອາຊຽນ ແລະ ແຜນການເຄື່ອນໄຫວໃນຕໍ່ໜ້າ.
- ວັນທີ 30 ສິງຫາ 2021, ທ່ານປະທານ ແລະ ຮອງປະທານ ພ້ອມດ້ວຍຄະນະບໍລິຫານງານ ສວ-ບກລ ຈຳນວນ 04 ທ່ານ, ເຂົ້າຮ່ວມກອງປະຊຸມສະຫະພັນນັກບັນຊີອາຊຽນທາງອອນລາຍ.




- ວັນທີ 02 ກັນຍາ 2021 ສວ-ບກລ ໄດ້ຈັດກອງປະຊຸມຄະນະບໍລິຫານງານ ແລະ ຄະນະກຳມະການຝຶກອົບຮົມຂຶ້ນ ໃນເວລາ 05:00-9:15 ໂມງ ທີ່ຫ້ອງປະຊຸມທາງອອນລາຍ (Skype) ໂດຍມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 15 ທ່ານ, ຈຸດປະສົງເພື່ອປຶກສາຫາລື ກ່ຽວກັບ ໂຄງການຮ່ວມມືກັບ ສຄຄຊ, ການຄາດຄະເນງົບປະ ມານສໍາລັບໂຄງການ WB, ແຜນການເປີດຊຸດຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີ (CPA) ຊຸດ XVII ແລະ ການກະກຽມການສອບເສັງຊຸດຝຶກອົບຮົມ CPA ແລະ ການວາງແຜນການຝຶກອົບຮົມແບບຕໍ່ເນື່ອງ (CPD).

- ວັນທີ ວັນທີ 11 ກັນຍາ 2021 ສວ-ບກລ ໄດ້ຈັດກອງປະຊຸມຄະນະກຳມະການຝຶກອົບຮົມຂຶ້ນ ໃນເວລາ 9:00-12:00 ໂມງ ທີ່ຫ້ອງປະຊຸມ ຊັ້ນ 02 ຂອງ ສວ-ບກລ ສໍາລັບຜູ້ບໍ່ສາມາດເຂົ້າຮ່ວມປະຊຸມໃນຫ້ອງເຊິ່ງໜ້າແມ່ນໄດ້ຈັດອອນລາຍ (Skype) ໄປພ້ອມກັນ ໂດຍມີຜູ້ເຂົ້າຮ່ວມທັງໝົດຈຳນວນ 15 ທ່ານ, ຈຸດປະສົງຂອງກອງປະຊຸມແມ່ນ ເພື່ອສະຫຼຸບຜົນການປະເມີນແບບຟອມສະໝັກຂໍຫລຸດໄລຍະການຝຶກງານເປັນນັກຊ່ຽວຊານບັນຊີລາວ ລຸ້ນ 12.

- ວັນທີ 11 ຕຸລາ 2021, ໄດ້ເຂົ້າຮ່ວມກອງປະຊຸມທາງໄກຂອງຄະນະກໍາມະທິການປະສານງານນັກຊ່ຽວຊານບັນຊີອາຊຽນ ຄັ້ງທີ 17 (17th ACPACC).

- ວັນທີ 15 ຕຸລາ 2021, ສວ-ບກລ ໄດ້ຈັດກອງປະຊຸມສາລັບ ຜູ້ຊີ້ນາການຝຶກງານ (Mentor/Remote Mentors) ເພື່ອໃຫ້ຄໍາແນະນໍາສໍາລັບຜູ້ຊີ້ນໍາ ແລະ ແນວທາງການເຮັດວຽກຮ່ວມກັບນັກຝຶກງານ.

- ວັນທີ 19 ຕຸລາ 2021, ໄດ້ປະຊຸມປຶກກາສາຫາລື ກັບ ສຄຄຊ ກ່ຽວກັບ ການກະກຽມເຊັນບົດບັນທຶກຊ່ວຍຈໍາ (MoU) ແລະ ການຝຶກອົບຮົມໄລຍະສັ້ນດັ່ງນີ້:
  - ການກະກຽມເຊັນບົດບັນທຶກຊ່ວຍຈໍາ (MoU): ຄາດວ່າຈະໄດ້ຈັດຂຶ້ນໃນວັນທີ 05 ພະຈິກ 2021 ທີ່ຈະມາເຖິງນີ້ ເພື່ອປະຕິບັດຕາມຄໍາສັ່ງຂອງລັດຖະບານ ຜູ້ເຂົ້າຮ່ວມໃນພິທີເຊັນທັງໝົດບໍ່ເກີນ 20 ທ່ານ ໃນນັ້ນລວມທັງໝົດຕົວແທນຈາກທັງສອງຝ່າຍ ແລະ ຜູ້ຄຸ້ມຄອງ.
  - ການຈັດຝຶກອົບຮົມໄລຍະສັ້ນໃຫ້ກັບນັກບັນຊີ ແລະ ຜູ້ບໍລິຫານຂອງບໍລິສັດທີ່ຈົດທະບຽນໃນຕະຫລາດຫຼັກຊັບ ແລະ ບໍລິສັດທີ່ຮັບໃຊ້ຜົນປະໂຫຍດສາທາລະນະໃນຂອບເຂດທົ່ວປະເທດ.

- ວັນທີ 20 ຕຸລາ 2021 ໄດ້ເຂົ້າຮ່ວມກອງປະຊຸມ ທີ່ຈັດໂດຍ ສຄຄຊ ໃນການປຶກສາຫາລື ກ່ ຽວກັບການສ້າງຄໍາແນະນໍາ ກ່ຽວກັບ ການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ.

- ວັນທີ 26 ຕຸລາ 2021, ໄດ້ເຂົ້າຮ່ວມການສາມະນາໃນຫົວຂໍ້ພັນທະສະມະຊິກ ຂອງສະຫະພັນນັກບັນຊີສາກົນ-IFAC (SMO1) ທີ່ຈັດໂດຍສະຫະພັນນັກບັນຊີອາຊຽນ (AFA).

- ວັນທີ 27 ຕຸລາ 2021, ໄດ້ມີການຈັດກອງປະຊຸມຮ່ວມກັບນັກຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີ ລຸ້ນ 12 ເພື່ອອະທິບາຍຊີ້ແຈງ ກ່ຽວກັບ ຜົນການສໍາພາດ ແລະ ອະທິບາຍຂັ້ນຕອນຕ່າງ ໆ ໃນການກະກຽມຝຶກງານດ້ວຍຮູບແບບຜ່ອນຜັນ.
- ວັນທີ 03 ພະຈິກ 2021, ທ່ານປະທານ ແລະ ຮອງປະທານ ສວ-ບກລ ໄດ້ເຂົ້າຮ່ວມກອງປະຊຸມ ກ່ຽວກັບ ການລົງທະບຽນສໍາລັບກອງປະຊຸມຂໍ້ມູນກຸ່ມຕິດຕາມຂອງ IFAC (IFAC's Monitoring Group Information Session) ໂດຍຜ່ານທາງອອນລາຍ, ຈຸດປະສົງຂອງກອງປະຊຸມດັ່ງກ່າວແມ່ນເພື່ອຮັບຟັງການລາຍງານຄວາມຄືບໜ້າຂອງການສະຫຼຸບບົດແນະນໍາໃນເອກະສານຂອງກຸ່ມຕິດຕາມ "ການເສີມສ້າງລະບົບການກໍານົດມາດຕະຖານດ້ານຈັນຍາບັນ ແລະ ການກວດສອບມາດຕະຖານ " .

- ວັນທີ 08 ພະຈິກ 2021, ທ່ານ ຮອງປະທານ ສວ-ບກລ ພ້ອມດ້ວຍຕົວແທນຈາກກົມຄຸ້ມຄອງການບັນຊີ ກະຊວງການເງິນ ໄດ້ເຂົ້າຮ່ວມກອງປະຊຸມສໍາມະນາດ້ານວິຊາການທາງອອນ ກ່ຽວກັບ ພັນທະໃນການເປັນສະມາຊິກ ຂໍ້ທີ 02 (SMO2): ມາດຕະຖານສາກົນດ້ານການສຶກສາສໍາລັບນັກວິຊາຊີບການບັນຊີວາງອອກໂດຍ IAESB ທີ່ຈັດໂດຍ AFA ແລະ IFAC ໃນຮູບແບບອອນລາຍ.

- ວັນທີ 10-11 ພະຈິກ 2021 ທ່ານປະທານ ແລະ ທ່ານຮອງປະທານ ສວ-ບກລ ໄດ້ເຂົ້າຮ່ວມກອງປະຊຸມສາມັນປະຈໍາປີ ຂອງ IFAC (IFAC Council Meeting) ໃນຮູບແບບອອນລາຍ.

- ວັນທີ 23 ພະຈິກ 2021, ທ່ານ ຮອງປະທານ ພ້ອມດ້ວຍຄະນະບໍລິຫານງານ ຂອງ ສວ-ບກລ ຈໍານວນ 04 ທ່ານ ໄດ້ເຂົ້າຮ່ວມກອງປະຊຸມສໍາມະນາ ກ່ຽວກັບ ການສ້າງຂີດຄວາມສາມາດໃຫ້ແກ່ຂະແໜງການບໍລິການທີ່ຕິດພັນກັບຂະແໜງການບັນຊີທີ່ທາງກົມກອດກາ ກະຊວງອຸດສະຫະກໍາ ແລະ ການຄ້າ ໄດ້ຈັດຂຶ້ນໃນວັນທີ 23-24 ພະຈິກ 2021 ທີ່ ໂຮງແຮມທາດຫຼວງດໍ, ຈຸດປະສົງຂອງກອງປະຊຸມແມ່ນເພື່ອສ້າງຂີດຄວາມສາມາດໃນການແລກປ່ຽນປະສົບການ ກ່ຽວກັບ ການຖ່າຍທອດເຕັກໂນໂລຊີ ແລະ ນະວັດຕະກໍາໃໝ່ຂອງຂະແໜງການເງິນ ໂດຍສະເພາະແມ່ນການບັນຊີຢູ່ ສ.ປ.ປ ລາວ ແລະ ໃນບັນດາພາຄີສັນຍາອາຊ່ຽນ-ຮົງກົງ.



- ວັນທີ 24 ພະຈິກ 2021, ທ່ານປະທານ ແລະ ທ່ານຮອງປະທານ ພ້ອມດ້ວຍຄະນະບໍລິຫານງານ 01 ທ່ານ ແລະ ຕົວແທນຈາກກົມຄຸ້ມຄອງການບັນຊີ 01 ທ່ານ ໄດ້ເຂົ້າຮ່ວມກອງປະຊຸມສະພາຄັ້ງທີ 133 ຂອງ AFA (133[th] AFA Council Meeting) ໃນຮູບແບບອອນລາຍ.




- ວັນທີ 30 ພະຈິກ 2021, ທ່ານ ປະທານ, ຮອງປະທານ ແລະ ຄະນະບໍລິຫານງານ ພ້ອມວິຊາການຂອງ ສອ-ບກລ ເຂົ້າຮ່ວມກອງປະຊຸມວິຊາການຂະແໜງການຄຸ້ມຄອງບັນຊີ ໃນຂອບເຂດທົ່ວປະເທດ, ຊຶ່ງຈັດໂດຍ ກົມຄຸ້ມຄອງການບັນຊີ ກະຊວງການເງິນ, ຈຸດປະສົງຂອງກອງປະຊຸມແມ່ນເພື່ອສະຫຼຸບຕີລາຄາຜົນການຈັດຕັ້ງ ວຽກງານຂອງຂະແໜງຄຸ້ມຄອງການບັນຊີ ໃນຂອບເຂດທົ່ວປະເທດປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022.



- ວັນທີ 01 ທັນວາ 2021, ທີມງານປັບປຸງລະບຽບພາຍໃນຂອງ ສວ-ບກລ, ນໍາໂດຍທ່ານປະທານ ສວ-ບກລ, ໄດ້ຈັດກອງປະຊຸມທາງອອນລາຍ ພາຍໃນທີມຂຶ້ນເພື່ອປຶກສາຫາລື ກ່ຽວກັບ ການປັບປຸງລະບຽບພາຍໃນຂອງ ສວ-ບກລ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດຈໍານວນ 16 ທ່ານ ລວມທັງທີມງານຈາກກົມຄຸ້ມຄອງການບັນຊີ ແລະ ສວ-ບກລ.

- ວັນທີ 01 ທັນວາ 2021, ສວ-ບກລ, ນໍາໂດຍທ່ານ ຮອງປະທານ ສວ-ບກລ ແລະ ຄະນະບໍລິຫານງານ ພ້ອມດ້ວຍທີມງານ ສວ-ບກລ, ໄດ້ເຂົ້າຮ່ວມກອງປະຊຸມປະຊຸມໂຕະມົນກ່ຽວກັບການປະກອບຄໍາເຫັນໃສ່ຮ່າງມາດຕະຖານການກວດສອບຫົວໜ່ວຍທີ່ມີຄວາມສະຫຼັບຊັບຊ້ອນໜ້ອຍ (Proposed Standard for Audits of Less Complex Entities-LCE) ທີ່ຈັດໂດຍສະຫະພັນນັກບັນຊີສາກົນຮ່ວມກັບສະຫະພັນນັກບັນຊີອາຊຽນ.




- ວັນທີ 07 ທັນວາ 2021, ໄດ້ຈັດກອງປະຊຸມພາຍໃນຄະນະປັບປຸງລະບຽບຂອງ ສວ-ບກລ ເພື່ອລາຍງານຄວາມຄືບໜ້າໃນການປັບປຸງລະບຽບ, ນໍາໂດຍທ່ານປະທານ ສວ-ບກລ, ໄດ້ຈັດກອງປະຊຸມທາງອອນລາຍ, ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ ຈໍານວນ 16 ທ່ານ ລວມທັງທີມງານຈາກກົມຄຸ້ມຄອງການບັນຊີ ແລະ ສວ-ບກລ.

- ວັນທີ 08 ທັນວາ 2021, ໄດ້ຈັດກອງປະຊຸມຄະນະຮັບຜິດຊອບເນື້ອໃນກອງປະຊຸມໃຫ່ຍ ຄັ້ງທໍາອິດເພື່ອປຶກສາຫາລືກ່ຽວກັບ ການກະກຽມການຈັດກອງປະຊຸມໃຫ່ຍ ຂອງ ສວ-ບກລ ທີ່ຈະມີຂຶ້ນຕົ້ນປີ 2022. ໃນກອງປະຊຸມດັ່ງກ່າວມີຜູ້ເຂົ້າຮ່ວທັງໝົດ 10 ທ່ານ ຊຶ່ງນໍາໂດຍ ທ່ານຮອງຫົວໜ້າກົມຄຸ້ມຄອງການບັນຊີ ແລະ ປະທານ ສວ-ບກລ ພ້ອມດ້ວຍຮອງປະທານຂອງ ສວ-ບກລ.

- ວັນທີ 21 ທັນວາ 2021, ສວ-ບກລ ໄດ້ຈັດກອງປະຊຸມປະຈາປີ ກັບຄະນະບໍລິຫານງານເພື່ອລາຍງານການເຄື່ອນໄຫວກິດຈະກໍາດ້ານຕ່າງໆໂດຍຫຍໍ້ໃນສົກປີ 2021, ເປັນປະທານກອງປະຊຸມໂດຍ ທ່ານປະທານ

ສອ-ບກລ ແລະ ມີຜູ້ເຂົ້າຮ່ວມທັງໝົດຈຳນວນ 15 ທ່ານ ໃນນີ້ມີຄະນະບໍລິຫານງານເຂົ້າຮ່ວມທັງໝົດຈຳນວນ 10 ທ່ານ ແລະ ພະນັກງານ ສອ-ບກລ ຈານວນ 05 ທ່ານ.

# IV. ດ້ານການເງິນ:

## 4.1 ລາຍຮັບ:

ແຫຼ່ງລາຍຮັບຕົ້ນຕໍແມ່ນໄດ້ມາຈາກການຝຶກອົບຮົມນັກຊ່ຽວຊານບັນຊີລາວ, ຮັບຈາກຄ່າບໍາລຸງສະມາຊິກບຸກຄົນ ແລະ ສະມາຊິກນິຕິບຸກຄົນ, ຮັບຈາກການສະໜັບສະໜູນກອງປະຊຸມ ເຊັ່ນຈາກສະມາຊິກ ສອ-ບກລ ແລະ ພາກສ່ວນອື່ນ ໆ.

## 4.2 ຂີດເຂດລາຍຈ່າຍ:

ແຫຼ່ງລາຍຈ່າຍຕົ້ນຕໍສໍາລັບປີ 2021 ແມ່ນຈ່າຍສໍາລັບການຝຶກອົບຮົມນັກຊ່ຽວຊານບັນຊີລາວ, ຈ່າຍຄ່າບໍລິຫານຫ້ອງການເປັນຕົ້ນຄ່າເຊົ່າຫ້ອງການ, ຄ່າເຊົ່າສະຖານທີ່ຝຶກອົບຮົມ, ຈ່າຍຄ່າຕອບແທນພະນັກງານ (ເງິນເດືອນ), ອາກອນເງິນເດືອນ, ປະກັນສັງຄົມ, ຈ່າຍຊື້ພາຫະນະຮັບໃຊ້ ໃນການເຄື່ອນໄຫວວຽກງານຕ່າງໆ, ຈ່າຍຄ່າບໍາລຸງສະມາຊິກສະຫະພັນນັກບັນຊີອາຊຽນ ແລະ ຈ່າຍຄ່າບໍາລຸງສະມາຊິກສະຫະພັນນັກບັນຊີສາກົນ ແລະ ອື່ນໆ.

ນອກນີ້ຍັງມີຄ່າໃຊ້ຈ່າຍສໍາລັບທີ່ປຶກສາທາງດ້ານວິຊາການເຊັ່ນ: ຄ່າເບ້ຍລ້ຽງ, ການເດີນທາງ ແລະ ທີ່ພັກອາໄສ. ນອກຈາກນີ້ ຍັງມີຄ່າໃຊ້ຈ່າຍສະໜັບສະໜູນ ກົມຄຸ້ມຄອງການບັນຊີ-ກະຊວງການເງິນ. (ມີເອກະສານລາຍງານການເງິນປະຈໍາປີ 2021 ຄັດຕິດ)

# V. ແຜນການເຄື່ອນໄຫວປະຈໍາປີ 2022

1. ສືບຕໍ່ປະສານ ແລະ ເຂົ້າຮ່ວມກອງປະຊຸມດ້ານວິຊາການກັບກົມຄຸ້ມຄອງການບັນຊີ ກະຊວງການເງິນ ເພື່ອວາງແຜນການກະກຽມກອງປະຊຸມໃຫຍ່ວິສາມັນ ພ້ອມທັງລາຍງານຫຍໍ້ຜົນການຈັດຕັ້ງປະຕິບັດວຽກ ແລະ ການກະກຽມລະບຽບການສໍາລັບນັກບັນຊີອາຊ່ຽນ. ແລະ ປະສານຮ່ວມມືກ່ຽວກັບການລາຍງານ ການນໍາສະເໜີຕໍ່ລັດຖະມົນຕີ ເພື່ອອອກໃບຢັ້ງຢືນທີ່ປຶກສາບັນຊີໃຫ້ແກ່ນັກຝຶກອົບຮົມທີ່ຮຽນຈົບຫຼັກສູດວິຊາຊີບຊ່ຽວຊານບັນຊີໃນຂັ້ນພື້ນຖານ;
2. ຈັດກອງປະຊຸມໃຫຍ່ວິສາມັນ ພ້ອມທັງເລືອກຕັ້ງຄະນະບໍລິຫານງານໃໝ່ ຂອງ ສອ-ບກລ, ຄາດວ່າຈະໄດ້ຈັດຂຶ້ນໃນຕົ້ນປີ 2022
3. ສືບຕໍ່ເກັບກໍາຂໍ້ມູນເບື້ອງຕົ້ນຂອງຊຸດຝຶກອົບຮົມຫຼັກສູດວິຊາຊີບ ຊ່ຽວຊານບັນຊີ ລຸ້ນ 13, ເພື່ອກະກຽມ ແລະ ກຽມພ້ອມໃນການຈັດຕັ້ງປະຕິບັດການຝຶກງານເປັນນັກຊ່ຽວຊານບັນຊີ;
4. ສືບຕໍ່ວາງແຜນການຈັດຝຶກອົບຮົມ ແລະ ສອບເສັງ ສໍາລັບຫຼັກສູດວິຊາຊີບຊ່ຽວຊານບັນຊີ ສໍາລັບຊຸດຝຶກອົບຮົມລຸ້ນ 14, 15 ແລະ ລຸ້ນ 16 ດ້ວຍຮູບແບບອອນລາຍ;
5. ວາງແຜນການເປີດຝຶກອົບຮົມ ຫຼັກສູດວິຊາຊີບຊ່ຽວຊານບັນຊີຊຸດໃໝ່ ລຸ້ນທີ 17;
6. ສືບຕໍ່ກະກຽມ ໂຄງການ ເພື່ອຂໍທຶນສະໜັບສະໜູນຈາກທະນາຄານໂລກ ກ່ຽວກັບ ການຈັດຕັ້ງ ກິດຈະກໍາຂອງ ສອ-ບກລ ເຊັ່ນການສະໜັບສະໜູນງົບປະມານເຂົ້າໃນໂຄງການພັດທະນາຫຼັກສູດວິຊາຊີບຊ່ຽວຊານບັນຊີ ການປະຕິຮູບໂຄງລ່າງພື້ນຖານດ້ານເທັກໂນໂລຢີ;

7. ສືບຕໍ່ ກະກຽມຝຶກອົບຮົມແບບຕໍ່ເນື່ອງ (CPD) ແລະ ຫົວຂໍ້ສະເພາະໃຫ້ກັບ ກວດສອບໃຫ້ແກ່ສະມາຊິກ ແລະ ຜູ້ອື່ນ ໆ ທີ່ສົນໃຈ ພ້ອມທັງເກັບກຳ ຕິດຕາມຈຳນວນຊົ່ວໂມງ CPD ຂອງສະມາຊິກ;
8. ສືບຕໍ່ຮ່ວມເຮັດວຽກກັບ ສະຫະພັນນັກບັນຊີອາຊຽນ (AFA) ແລະ ສະຫະພັນນັກບັນຊີສາກົນ (IFAC);
9. ສືບຕໍ່ຮ່ວມເຮັດວຽກກັບ ຄະນະກຳມະການພາຍນອກຕ່າງໆ ຕາມໜ້າວຽກ ເຊັ່ນ: ຄະນະກຳມະການຄົ້ນຄ້ວາ ແລະ ສ້າງຄຳແນະນຳຈັດຕັ້ງປະຕິບັດກ່ຽວກັບ IFRS;
10. ສືບຕໍ່ປະສານງານກັບ ສຳນັກງານຄຸ້ມຄອງຫຼັກຊັບ ໃນການກະກຽມຝຶກອົບຮົມໄລຍະສັ້ນໃຫ້ກັບການນຳຂອງຜູ້ຄຸ້ມຄອງ, ພະນັກງານວິຊາການຂອງຜູ້ຄຸ້ມຄອງ ແລະ ນັກບັນຊີ ທີ່ນອນໃນບັນດາຫົວໜ່ວຍທຸລະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ;
11. ສືບຕໍ່ສ້າງໂຄງການພັດທະນາຫຼັກສູດວິຊາຊີບຊ່ຽວຊານບັນຊີລາວ ໃຫ້ເປັນຫຼັກສູດສະເພາະຂອງ ສອ-ບກລ, ໃຫ້ສອດຄ່ອງກັບສະພາບເສດຖະກິດ ແລະ ສັງຄົມຂອງລາວໃນປັດຈຸບັນ ແລະ ຮັບປະກັນທາງດ້ານຄຸນນະພາບໃຫ້ສອດຄ່ອງຕາມມາດຕະຖານສາກົນດ້ານການສຶກສາ ແລະ ຄາດວ່າຈະສຳເລັດໃນປີ 2022;
12. ຮ່ວມກັບກົມຄຸ້ມຄອງການບັນຊີ ສືບຕໍ່ປັບປຸງກົດລະບຽບຊໍ່ວຄືວ;
13. ຮ່າງກົດການປະພຶດ ຂອງ ສອ-ບກລ ເພື່ອເປັນເອກະສານຄັດຕິດ ກັບກົດລະບຽບສະບັບປັບປຸງ;
14. ສືບຕໍ່ຮ່າງລະບຽບການ ກ່ຽວກັບການຈົດທະບຽນສະມາຊິກ ຂອງ ສອ-ບກລໃຫ້ສົມບູນ ເພື່ອການຮັບຮອງ;
15. ຮ່າງຍຸດທະສາດການພັດທະນາ ສອ-ບກລ ພາຍຫຼັງການການປະເມີນຜົນ ຕາມແບບປະເມີນ ຂອງ CAPA ທີ່ເປັນທີ່ຮັບຮູ້ໂດຍ IFAC;
16. ສືບຕໍ່ປະສານງານກັບ ສະມະຄົມນັກບັນຊີ ລາຊະອານາຈັກອັງກິດ (ACCA) ເພື່ອນັດໝາຍປຶກສາຫາລື ກ່ຽວກັບການຕໍ່ໄລຍະເວລາຂອງ ສັນຍາຮ່ວມມືລະຫວ່າງສອງຝ່າຍ;
17. ສືບຕໍ່ຮ່ວມມືກັບຄູ່ຮ່ວມຍຸດທະສາດ ທັງພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນຂໍ້ມູນທາງດ້ານເຕັກນິກວິຊາການຕ່າງ ໆ.

ນະຄອນຫຼວງວຽງຈັນ, ວັນທີ 05 ມີນາ(03) 2022

**ປະທານສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ**

ປະທານ

ດຣ.ນ.ພິລານີ ພິດສະໄໝ

# ເອກະສານຊ້ອນທ້າຍ

☑ ລາຍຊື່ສະມາຊິກ ຂອງ ສວ-ບກລ

☑ ເອກະສານລາຍງານການເງິນສຳລັບປີການບັນຊີທີ່ສິ້ນສຸດ ໃນວັນທີ 31 ທັນວາ 2021

# ເອກະສານຊ້ອນທ້າຍ 1: ລາຍຊື່ສະມາຊິກ ຂອງ ສວ-ບກລ

- ລາຍຊື່ສະມາຊິກນິຕິບຸກຄົນ ສາມັນ ຂອງ ສວ-ບກລ (ບໍລິສັດພາຍໃນ)

| No. | Membership No. | ຊື່ບໍລິສັດ | Company's Name | Business Type | Phone | Email |
|---|---|---|---|---|---|---|
| 1 | lcpaa/1-2-00001 | ບໍລິສັດ ທີຊີ ບໍລິການບັນຊີ ຈຳກັດຜູ້ດຽວ | TC Accounting Service Co.,LTD | Accounting & Auditing | 56319965 | poupee1990@hotmail.com; bounhomsvnp@gmail.com |
| 2 | lcpaa/1-2-00003 | ບໍລິສັດ ເອແອນດີ ທີ່ປຶກສາບັນຊີ ແລະ ບໍລິການ ຈຳກັດ | A&D Accounting and Consultant Co.,LTD | Accounting | 021 453224; 55502119 | aadservice@yahoo.com ; c_donekham@yahoo.com; maninh.c@gmail.com |
| 3 | lcpaa/1-2-00005 | ບໍລິສັດ ເອໄອເອັສ ບໍລິການບັນຊີ ແລະ ກວດສອບ ຈຳກັດ | AIS Accounting and Auditing Service Co.,LTD | Accounting & Auditing | 021 620582; 55733559 | ais_2005@yahoo.com |
| 4 | lcpaa/1-2-00006 | ວິສາຫະກິດ ສ່ວນບຸກຄົນ ແສງສະເດັດ ທີ່ປຶກສາບັນຊີ | Account Commercial Finance Individual Enterprise | Accounting & Auditing | 56118170; 55994488 | lookmeewhite@hotmail.com; sy_kbac@yahoo.com |
| 5 | lcpaa/1-2-00007 | ບໍລິສັດ ເອກປັນຍາ ທີ່ປຶກສາ ຈຳກັດຜູ້ດຽວ | Ekpanya Consulting Co.,LTD | Accounting | 56542324; 28888248; 54773388; 021 412635 | akaekpanya@yahoo.com |
| 6 | lcpaa/1-2-00008 | ບໍລິສັດ ເອເຄຊີ ທີ່ປຶກສາບັນຊີ ແລະ ກວດສອບ ຈຳກັດຜູ້ດຽວ | AKC Accounting Consultant & Audit Sole Co.,LTD | Accounting | 021 453553; 55514827 | akcconsultan@yahoo.com |
| 7 | lcpaa/1-2-00010 | ບໍລິສັດ ເອຊີເອ ຈຳກັດ | ACA Co.,LTD | Accounting & Auditing | 22403446; 55685819; 22401553 | phonemy_sp@yahoo.com |
| 8 | lcpaa/1-2-00012 | ບໍລິສັດ ເອຊີ ບໍລິການ ແລະ ທີ່ປຶກສາບັນຊີ ຈຳກັດ | Accounting & Consultancy Service Co.,LTD | Accounting | 021 314889; 55520979; 23222599 | vanhdaraktr@yahoo.com; vanhdara@khanthalod.net |

| No. | Membership No. | ຊື່ບໍລິສັດ | Company's Name | Business Type | Phone | Email |
|---|---|---|---|---|---|---|
| 9 | lcpaa/1-2-00013 | ບໍລິສັດ ເອເອເອັສ ຈຳກັດຜູ້ດຽວ | AAS Co.,LTD | Accounting | 22210550; 55503009 | aas.vongsouvanh@gmail.com |
| 10 | lcpaa/1-2-00014 | ບໍລິສັດ ມານະຈິດ ບໍລິການທີ່ປຶກສາ ແລະ ກວດສອບບັນຊີ ຈຳກັດ | Manachit Accounting Service, Consultancy and Auditing Co.,LTD | Accounting | 021 460542; 22255509 | suliyeth@hotmail.com |
| 11 | lcpaa/1-2-00015 | ບໍລິສັດ ເອັສ-ທຸລະກິດການບັນຊີ ຈຳກັດ | S-Business Accounting Co.,LTD | Accounting | 021 453892; 56007007; 22220507; 56007007 | sbasoft@hotmail.com |
| 12 | lcpaa/1-2-00017 | ບໍລິສັດ ສົມພົງ ບໍລິການບັນຊີ ຈຳກັດຜູ້ດຽວ | Somphong Accouting Service Sole Co.,LTD | Accounting & Auditing | 030 5713769; 021 352218; 55611998 | phongss4@gmail.com |
| 13 | lcpaa/1-2-00018 | ບໍລິສັດ ທີ່ປຶກສາ ແລະ ບໍລິການ ແອັກມິນ ຈຳກັດຜູ້ດຽວ | ACCMIN Consulting and Services Co.,Ltd | Accounting & Auditing | 021 264197; 021 264196; 55620905 | khampiew@accminlao.com; contactus@accminlao.com |
| 14 | lcpaa/1-2-00020 | ບໍລິສັດ ເຄເຄພີ ທີ່ປຶກສາບັນຊີ ຈຳກັດຜູ້ດຽວ | KKP Accounting Consultancy Sole Co.,LTD | Accounting | 55707285 | kkpaccounting@hotmail.com |
| 15 | lcpaa/1-2-00022 | ວິສາຫະກິດ ສ່ວນບຸກຄົນ ເອັສ ບີ ເອັນ ບໍລິການບັນຊີ ແລະ ກວດສອບບັນຊີ | SBN Accounting Consultant Enterprise | Accounting & Auditing | 55629051 | bounnacpa@yahoo.com |
| 16 | lcpaa/1-2-00023 | ບໍລິສັດ ຈັນທະວົງ ແອນ ອາໂຊຊີເອັສ ຈຳກັດ | Chanthavong and Associates Co.,LTD | Accounting & Auditing | 55584675; 021 262613; 55904088; 58876666 | souksavanhc@yahoo.com; khamhou.cna@laoaccountants.com |
| 17 | lcpaa/1-2-00024 | ບໍລິສັດ ບໍລິການບັນຊີ ແລະ ທີ່ປຶກສາກ່ຽວກັບທຸລະກິດ ຈຳກັດຜູ້ດຽວ | Accounting Service and Business Consultancy Sole Co.LTD | Accounting & Auditing | 021 480578; 59226399; 22241577 | asbcthanh7@gmail.com |

| No. | Membership No. | ຊື່ບໍລິສັດ | Company's Name | Business Type | Phone | Email |
|---|---|---|---|---|---|---|
| 18 | lcpaa/1-2-00026 | ບໍລິສັດ ລາວບໍລິການບັນຊີ ແລະ ກວດສອບບັນຊີ ຈຳກັດຜູ້ດຽວ | Lao Accounting Service and Auditing Sole Co.,LTD | Accounting & Auditing | 021 480226; 55513247 | laoaudit@hotmail.com |
| 19 | lcpaa/1-2-00027 | ບໍລິສັດ ວຽງຈັນອິນເຕີເນເຊິນແນວ ຈຳກັດ | Vientiane International Co.,LTD | Accounting & Auditing | 021 455065; 021 455017; 55792275 | phouvanhkolao@hotmail.com; phouvanh_acc@outlook.com; souksavanhinthavong1@gmail.com |
| 20 | lcpaa/1-2-00028 | ບໍລິສັດ ແອກສ໌ຄິວຣະຊີ ທີ່ປຶກສາ, ບໍລິການບັນຊີ ແລະ ກວດສອບ ຈຳກັດຜູ້ດຽວ | Accuracy Accounting Consultancy & Auditing Services Co., LTD | Accounting & Auditing | 021 621126; 22231456; 55520061 | aaca.sisoulath@yahoo.com; seng.nongteng@yahoo.com; palina.ssl@gmail.com |
| 21 | lcpaa/1-2-00029 | ບໍລິສັດ ເຄພີເອັມ ທີ່ປຶກສາ ແລະ ກວດສອບ ຈຳກັດຜູ້ດຽວ | KPM Accounting Consultancy and Auditing Sole Co.,LTD | Accounting | 021 215596; 22412937 | viphaphone_manivong@yahoo.com; kpm.acc.coltd@gmail.com |
| 22 | lcpaa/1-2-00030 | ບໍລິສັດ ເອເຊຍ ປາຊີຟິກ ບໍລິການບັນຊີ ແລະ ກວດສອບ ຈຳກັດຜູ້ດຽວ | Asia Pacific Accounting and Audit Services Sole Co.,LTD | Accounting & Auditing | 22239550 | oun_one@yahoo.com |
| 23 | lcpaa/1-2-00033 | ບໍລິສັດ ພັນຍຸລາດ ທີ່ປຶກສາບັນຊີ ແລະ ກວດສອບ ຈຳກັດຜູ້ດຽວ | Phanyoulath Consulting Accounting and Auditing Co., LTD | Accounting & Auditing | 030 9883911; 021 216176; 55613673 | soubanh245@yahoo.com; SOISSL5577@HOTMAIL.COM |
| 24 | lcpaa/1-2-00034 | ບໍລິສັດ ທີ່ປຶກສາອີບິດ ຈຳກັດ | EBIT Consultancy Co.,LTD | Accounting & Auditing | 021 740486; 021 740481; 22449996 | skongpasa@ebitconsultancy.com; info@ebitconsultancy.com |
| 25 | lcpaa/1-2-00035 | ບໍລິສັດ ພີເອ ບໍລິການ ຈຳກັດ | PA Service Co.,LTD | Accounting | 021 254056; 021 254057; 55717349 | ploy@laotel.com |

| No. | Membership No. | ຊື່ບໍລິສັດ | Company's Name | Business Type | Phone | Email |
|---|---|---|---|---|---|---|
| 26 | lcpaa/1-2-00036 | ບໍລິສັດ ເອັສພີ ທີ່ປຶກສາບັນຊີ - ກວດສອບບັນຊີ ແລະ ທີ່ປຶກສາການລົງທຶນ ຈຳກັດ | SP Accounting Consultancy - Auditing and Investment Consultancy Co.,LTD | Accounting | 55662915; 22822895; 021 213605; 55502185 | spaca_l@yahoo.com; sanasin@gmail.com |
| 27 | lcpaa/1-2-00038 | ບໍລິສັດ ເອັສເອັນພີ ບໍລິການບັນຊີ ຈຳກັດຜູ້ດຽວ | SNP Accounting Service Co.,LTD | Accounting & Auditing | 021 213063; 55514551 | snpaccounting@yahoo.com |
| 28 | lcpaa/1-2-00039 | ບໍລິສັດ ເຄເອັສບີ ບໍລິການບັນຊີ ຈຳກັດ | KSB Accounting Services Limited | Accounting & Auditing | 021 250700; 021 550511; 22235111 | ksblao7@ymail.com |
| 29 | lcpaa/1-2-00040 | ບໍລິສັດ ເອັສພີເຄ ຈຳກັດ | SPK Co.,Ltd | Accounting & Auditing | 22444458; 030 5222117; 22239596; 021 353484 | k.chindavong17@gmail.com |
| 30 | lcpaa/1-2-00042 | ບໍລິສັດ ທຣິບເປີນເອ ທີ່ປຶກສາ ບໍລິການບັນຊີ ແລະ ກວດສອບບັນຊີ ຈຳກັດຜູ້ດຽວ | Advance Accounting and Auditing Service Co.,LTD | Accounting | 021 240009; 55502414 | vieng502@yahoo.com |
| 31 | lcpaa/1-2-00043 | ບໍລິສັດ ອາເກຣນ ທີ່ປຶກສາບັນຊີ ຈຳກັດຜູ້ດຽວ | AR KRYN Consulting Service Sole Co.,LTD | Accounting | 20666670 | rkrynservice@hotmail.com |
| 32 | lcpaa/1-2-00044 | ບໍລິສັດ ສະຫວັນ ທີ່ປຶກສາ - ກວດສອບ - ຝຶກດ້ານການບັນຊີ ຈຳກັດຜູ້ດຽວ | SAVAN Consultant - Audits - Training Accounting Co., Ltd | Accounting | 041 212799; 99728888; 55541048 | scatavanh@hotmail.com |
| 33 | lcpaa/1-2-00046 | ບໍລິສັດ ຊີເອແອວ ທີ່ປຶກສາ ແລະ ກວດສອບບັນຊີ (ລາວ) ຈຳກັດ | CAL Consultancy and Auditing (Lao) Co.,LTD | Accounting & Auditing | 55606877 | cal.vanxay@yahoo.com |
| 34 | lcpaa/1-2-00047 | ບໍລິສັດ ລາວ - ພີພີເອ ທີ່ປຶກສາບັນຊີ ແລະ ກວດສອບ ຈຳກັດ | Lao - PPA Accounting Consultancy and Auditing Co., LTD | Accounting & Auditing | 22422842 | sengthong.acc@gmail.com; skinthaxay@gmail.com; toymalay1997@gmail.com |

| No. | Membership No. | ຊື່ບໍລິສັດ | Company's Name | Business Type | Phone | Email |
|---|---|---|---|---|---|---|
| 35 | lcpaa/1-2-00048 | ບໍລິສັດ ເອັສທີດີ ບໍລິການບັນຊີ ຈຳກັດຜູ້ດຽວ | STD Accounting Service Sole Co.,LTD | Accounting | 030 5747709; 99545269; 54764783 | std-sole@hotmail.com |
| 36 | lcpaa/1-2-00049 | ບໍລິສັດ ທີເອັດສ ທີ່ປຶກສາບັນຊີ ແລະ ກວດສອບ ຈຳກັດ | TS Accounting and Auditing Co.,LTD | Accounting & Auditing | 56366264; 55605233; 021 215678 | Tsaa.company@yahoo.com |
| 37 | lcpaa/1-2-00050 | ບໍລິສັດ ເອແອນເອ ບໍລິການ ແລະ ທີ່ປຶກສາບັນຊີ ຈຳກັດຜູ້ດຽວ | A and A Accounting and Consultancy Service Sole Co.,LTD | Accounting | 22225117; 55993644 | aloun.aac@gmail.com |
| 38 | lcpaa/1-2-00051 | ບໍລິສັດ ເອພີ  ທີ່ປຶກສາ ແລະ ກວດສອບ ຈຳກັດຜູ້ດຽວ | AP Accounting Consultancy and Auditing Sole Co.,LTD | Accounting | 021 711249; 99999500 | ap_cas@yahoo.com; ap.casss@gmail.com |
| 39 | lcpaa/1-2-00052 | ບໍລິສັດ ທີ່ປຶກສາບັນຊີ ລາວເອເຊຍ ຈຳກັດຜູ້ດຽວ | Accountant Lao - Asia Sole Co.,LTD | Accounting | 56701448 | accountkhamphou@hotmail.com; dangnakhone@gmail.com |
| 40 | lcpaa/1-2-00054 | ບໍລິສັດ ເຮັດທີ ທີ່ປຶກສາ ຈຳກັດຜູ້ດຽວ | HT Accountant Sole Co.,LTD | Accounting | 22219390; 55627265 | phaipanya@yahoo.com |
| 41 | lcpaa/1-2-00056 | ບໍລິສັດ ເອັສເຄເອັນພີ ຈຳກັດ | SKNP Co.,LTD | Accounting & Auditing | 55449559; 55985959 | sonexay.silaphet@gmail.com; khamphath.silaphet@gmail.com |
| 42 | lcpaa/1-2-00057 | ບໍລິສັດ ເອັນທີເອ ຈຳກັດ | NTA Co .,LTD | Accounting & Auditing | 91179896; 22212023 | anolay@phosy.com |
| 43 | lcpaa/1-2-00058 | ບໍລິສັດ ເອ 2 ແຊັດ ຈຳກັດຜູ້ດຽວ | A2Z Sole Co.,LTD | Accounting & Auditing | 23175999 | Thephathay.a2z@gmail.com; info.a2zback@gmail.com |
| 44 | lcpaa/1-2-00059 | ບໍລິສັດ ເອເອເອັສ ລາວ ຈຳກັດ | AAS Lao Co.,LTD | Accounting & Auditing | 55612518 | manisouks@yahoo.com; santi75828@gmail.com |
| 45 | lcpaa/1-2-00060 | ບໍລິສັດ ທີ່ປຶກສາບັນຊີລາວ-ສາກົນ ຈຳກັດຜູ້ດຽວ | Lao-International Accounting Consultancy Sole Co.,LTD | Accounting | 22402366 | gnasonthi@yahoo.com |

| No. | Membership No. | ຊື່ບໍລິສັດ | Company's Name | Business Type | Phone | Email |
|---|---|---|---|---|---|---|
| 46 | lcpaa/1-2-00061 | ບໍລິສັດ ວີເອັສພີ ບໍລິການບັນຊີ ຈຳກັດ | VSP Accounting Service Co.,LTD | Accounting & Auditing | 021 710667; 22229793 | padith@yahoo.com; vsppadith@gmail.com |
| 47 | lcpaa/1-2-00062 | ບໍລິສັດ ເຄພີພີ ຈຳກັດ | KPP Co.,LTD | Accounting & Auditing | 030 5713793; 22225297; 99961627 | kk.phearkeo@gmail.com; phetlamngeun@gmail.com |
| 48 | lcpaa/1-2-00063 | ບໍລິສັດ ບີດີໂອ ລາວ ຈຳກັດ | BDO (Laos) Co.,LTD | Accounting & Auditing | 021 243453; 99999566 | sslim@bdo.my; souvannaphone@bdo.com.la; ketsana.phansalavong@gmail.com |
| 49 | lcpaa/1-2-00064 | ບໍລິສັດ ວຽງຈັນການບັນຊີ ຈຳກັດຜູ້ດຽວ ( ມີສາຂາຢູ່ອັດຕະປື ທ່ານ ໂອໄດ ລ້ຽງແສງທອງ ເປັນຜູ້ອຳນວຍການ ) | Vientiane Accounting Sole Co.,LTD | Accounting | 021 561058; 22219997 | viengkeo.acc@gmail.com |
